# ຄູ່ມືແນະນຳ

# ການຝຶກອົບຮົມປະຕິທິນກົດໝາຍປີ 2022




2022

ສະຫງວນລິຂະສິດ

# ຄຳນຳ

ຄູ່ມືແນະນຳການຝຶກອົບຮົມປະຕິທິນກົດໝາຍປີ 2022 ແມ່ນໄດ້ພັດທະນາຂຶ້ນ ເພື່ອເປັນຄູ່ມືສະໜັບສະໜູນການຝຶກອົບຮົມໃຫ້ທີມງານຜູ້ຜະລິດປະຕິທິນທີ່ຕາງໜ້າຈາກ ອົງການຈັດຕັ້ງລັດ, ອົງການຈັດຕັ້ງທາງສັງຄົມ ອົງການຈັດຕັ້ງສາກົນ ແລະ ສະຖາບັນການສຶກສາ ນັກວິຊາການ ຜູ້ທີ່ຈະນຳເອົາປະຕິທິນກົດໝາຍໄປເປັນສື່ໂຄສະນາເຜີຍແຜ່ດ້ວຍຮູບແບບຕ່າງໆ ເພື່ອສະໜັບສະໜູນວຽກງານໂຄສະນາເຜີຍແຜ່ຂໍ້ມູນ ຂ່າວສານຜ່ານປະຕິທິນກົດໝາຍໃຫ້ມີປະສິດທິພາບ, ຫຼາກຫຼາຍຫົວຂໍ້ທີ່ຕິດພັນກັບການດຳລົງຊີວິດຂອງປະຊາຊົນລາວ ລວມທັງກຳນົດວັນສຳຄັນຕ່າງໆທາງລັດຖະການ ແລະ ສາກົນ ຊຶ່ງກວມເອົາຫຼາຍຂະແໜງການ ເຊັ່ນ ທີ່ດິນ, ປ່າໄມ້, ກະສິກຳ, ສິ່ງແວດລ້ອມ, ການມີສ່ວນຮ່ວມຂອງປະຊາຊົນໃນໂຄງການພັດທະນາ ແລະ ການຍົກສູງບົດບາດຍິງ-ຊາຍ.

***ຄູ່ມືສະບັບນີ້ ປະກອບດ້ວຍ ສອງ ພາກຄື:***

***ພາກສະເໜີທົ່ວໄປ*** ຊຶ່ງລວມມີ ປະຫວັດຄວາມເປັນມາຂອງການສ້າງຄູ່ມື, ຈຸດປະສົງ, ຄວາມສຳຄັນ ແລະ ຄຸນປະໂຫຍດ, ການນຳໃຊ້ຄູ່ມືແນະນຳຝຶກອົບຮົມປະຕິທິນກົດໝາຍ ແລະ ອຸປະກອນສຳລັບການຝຶກອົບ ຮົມ. ໃນພາກນີ້ ຜູ້ເຂົ້າຮ່ວມຝຶກອົບຮົມຈະໄດ້ຮຽນຮູ້ທົ່ວໄປທີ່ມາກ່ຽວກັບຄູ່ມືຢ່າງລະອຽດ.

***ພາກເນື້ອໃນ*** ປະກອບດ້ວຍ ໜ້າປົກ, ໂລໂກ້ ເບີໂທສາຍດ່ວນ, ຫົວຂໍ້ປະຕິທິນແຕ່ລະໜ້າ, ຮູບພາບປະກອບ, ຄຳອະທິບາຍຮູບພາບ, ວິທີການແຕ່ລະຫົວຂໍ້ ມີຄຳແນະນຳສຳລັບຄູຝຶກເພື່ອນຳໃຊ້ໃນການເຜີຍແຜ່, ເນື້ອໃນເອກະສານອ້າງອີງມາດຕາກົດໝາຍ ແລະ ຂໍ້ມູນເພີ່ມເຕີມ. ເນື້ອໃນທັງໝົດ ແມ່ນຖືກອອກແບບ ແລະສັງ ລວມໃຫ້ເຂົ້າໃຈງ່າຍ.

ປຶ້ມຄູ່ມືສະບັບນີ້, ຂຽນ, ກວດແກ້ໂດຍທີມງານຂອງໂຄງການໄລຟ໌ ແລະ ໄດ້ຜ່ານການປະກອບຄຳເຫັນຈາກທີມງານຜູ້ຜະລິດປະຕິທິນ. ເຖິງຢ່າງໃດກໍຕາມ, ຄູ່ມືແນະນຳການຝຶກອົບຮົມປະຕິທິນກົດໝາຍປີ 2022 ຄົງບໍ່ສາມາດຫຼີກລ້ຽງຂໍ້ຜິດພາດ. ດັ່ງນັ້ນ, ຖ້າຫາກເນື້ອໃນສ່ວນໃດທີ່ບໍ່ທັນສົມບູນ ທີມງານຍິນດີຮັບຟັງຄຳຕຳນິຕິຊົມ ເພື່ອປັບປຸງຄູ່ມືແນະນຳປະຕິທິນກົດໝາຍໃນປີຕໍ່ໆໄປໃຫ້ສົມບູນຂຶ້ນ.

ຂໍຂອບໃຈ

# ສາລະບານ


I. ພາກສະເໜີ ........ 1

1. ປະຫວັດຄວາມເປັນມາ ........ 1

2. ຈຸດປະສົງຂອງປະຕິທິນ ........ 1

3. ຄວາມສຳຄັນ ແລະ ຄຸນປະໂຫຍດຂອງປະຕິທິນກົດໝາຍ ........ 2

4. ການນຳໃຊ້ຄູ່ມືແນະນຳຝຶກອົບຮົມປະຕິທິນກົດໝາຍ ........ 2

4.1 ຮູບແບບການຝຶກອົບຮົມ ........ 2

4.2 ຮູບແບບການເຜີຍແຜ່ ........ 3

ການເຜີຍແຜ່ຕໍ່ໃຫ້ກັບຊຸມຊົນຕ້ອງໄດ້ນຳໃຊ້ວິທີການຢູ່ໃນຄູ່ມືເຫຼັ້ມນີ້ເປັນຫຼັກ (ເບິ່ງໄດ້ຢູ່ວິທີການ ແລະ ຄຳແນະນຳສຳລັບຄູຝຶກ) ເພື່ອງ່າຍໃນການຊຸກຍູ້, ຕິດຕາມ ແລະ ປະເມີນຜົນ. ........ 3

5. ອຸປະກອນສຳລັບຈັດຝຶກອົບຮົມ ........ 4

II. ພາກເນື້ອໃນປະຕິທິນ ........ 4

1. ຫົວຂໍ້ຫຼັກປະຕິທິນກົດໝາຍ ປີ 2022 ........ 4

2. ສັງລວມມາດຕາກົດໝາຍ ແລະ ເອກະສານອ້າງອີງທີ່ກ່ຽວຂ້ອງກັບປະຕິທິນກົດໝາຍປີ 2022 ........ 5

3. ເນື້ອໃນປະຕິທິນກົດໝາຍປີ 2022 ........ 5

3.1 ໜ້າທີ 1 ໜ້າປົກປະຕິທິນ ການໄດ້ສິດນຳໃຊ້ທີ່ດິນຕາມປະເພນີ ........ 6

3.2 ໜ້າທີ 2: ເບີສາຍດ່ວນ ແລະ ໂລໂກ້ກາໝາຍ ........ 8

3.3 ໜ້າທີ 3: ການເຜີຍແຜ່ຂໍ້ມູນຂ່າວສານກ່ຽວກັບໂຄງການພັດທະນາໃຫ້ກັບຊຸມຊົນໃນຮູບແບບຂອງການຍິນຍອມດ້ວຍຄວາມສະໝັກໃຈ ໂດຍໄດ້ຮັບຂໍ້ມູນລ່ວງໜ້າ ແລະ ພຽງພໍ ........ 9

3.4 ໜ້າທີ 4: ການມີສ່ວນຮ່ວມຂອງປະຊາຊົນ ໃນການໃຫ້ເຊົ່າ ຫຼື ສຳປະທານທີ່ດິນຂອງລັດ ........ 13

3.5 ໜ້າທີ 5: ຜົນກະທົບຂອງການປ່ຽນແປງດິນຟ້າອາກາດ ແລະ ການຫຼຸດຜ່ອນຄວາມສ່ຽງ ........ 17

3.6 ໜ້າທີ 6: ຄວາມສະເໝີພາບຍິງ-ຊາຍ ໃນວຽກງານກະສິກຳ, ການປົກປັກຮັກສາປ່າໄມ້ ແລະ ສິ່ງແວດລ້ອມ ........ 20

3.7 ໜ້າທີ 7: ສັນຍາກະສິກຳ ........ 23

3.8 ໜ້າທີ 8: ການສືບທອດມູນມໍຣະດົກກ່ຽວກັບທີ່ດິນ ........ 26

ແບບຟອມຊ້ອນທ້າຍ ........ 30

ແບບຟອມເກັບກຳຂໍ້ມູນ ຜູ້ໄດ້ຮັບຜົນປະໂຫຍດຈາກການເຜີຍແຜ່ປະຕິທິນ ........ 30

ແບບຟອມບັນທຶກຄຳຮ້ອງຂໍຊ່ວຍເຫຼືອທາງດ້ານກົດໝາຍ ຈາກຜູ້ໄດ້ຮັບຜົນປະໂຫຍດ ........ 31

# I. ພາກສະເໜີ

## 1. ປະຫວັດຄວາມເປັນມາ

ໃນໄລຍະຜ່ານມາ ລັດຖະບານ ສປປ ລາວ ໄດ້ໃຫ້ຄວາມສຳຄັນໃນການສົ່ງເສີມການພັດທະນາເສດຖະກິດ-ສັງຄົມ ແລະ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃຫ້ນັບມື້ນັບດີຂຶ້ນ. ອີງໃສ່ສະພາບໃນໄລຍະຜ່ານມາ ຍັງມີຫຼາຍໂຄງການລົງທຶນທີ່ພົບພໍ້ບັນຫາ, ໂດຍສະເພາະແມ່ນການລົງທຶນທີ່ບໍ່ມີຄວາມຮັບຜິດຊອບ ຊຶ່ງສ້າງຜົນກະທົບສູງສົມຄວນຕໍ່ປະຊາຊົນ ບໍ່ວ່າຈະເປັນການປ່ຽນແປງທີ່ຢູ່ອາໄສ, ວິຖີຊີວິດ ແລະ ຄວາມເຊື່ອຖື. ອີກທັງປະກົດການຕ່າງໆທີ່ເກີດຂຶ້ນພາຍໃນຊຸມຊົນບໍ່ວ່າຈະເປັນການນຳໃຊ້ປ່າໄມ້ ແລ້ວຈະເຮັດວິທີໃດເພື່ອໃຫ້ຊາວບ້ານເຂົ້າໃຈເຖິງແນວທາງໃນການນຳໃຊ້ຢ່າງຍືນຍົງ, ຄວາມສະເໝີພາບຍິງຊາຍໃນດ້ານຕ່າງໆ, ບັນຫາທີ່ເກີດຂຶ້ນທາງດ້ານສັນຍາກະສິກຳ.

ດັ່ງນັ້ນ ໃນການສ້າງປະຕິທິນກົດໝາຍ ເປັນອີກເຄື່ອງມືສື່ສານໜຶ່ງ ເພື່ອໃຫ້ປະຊາຊົນເຂົ້າເຖິງຂໍ້ມູນຂ່າວສານ ທາງດ້ານກົດໝາຍກ່ຽວກັບ ທີ່ດິນ ແລະ ຊັບພະຍາກອນທຳມະຊາດ ໃຫ້ເຂົ້າກັບສະພາບການພັດທະນາເສດຖະກິດ-ສັງຄົມ ແລະ ເປັນການປົກປ້ອງສິດ ແລະ ຜົນປະໂຫຍດຂອງປະຊາຊົນອີກດ້ວຍ.

ເພື່ອໃຫ້ປະຊາຊົນເຂົ້າເຖິງຂໍ້ມູນຂ່າວສານທາງດ້ານກົດໝາຍຢ່າງແທ້ຈິງ ໃນໄລຍະຜ່ານມາໄດ້ມີການແຈກຢາຍປະຕິທິນໃຫ້ກັບປະຊາຊົນ ຍັງມີຄວາມຫຍຸ້ງຍາກເພາະບາງຄົນທີ່ບໍ່ໄດ້ຮ່ວມສ້າງປະຕິທິນຈະບໍ່ຮູ້ຄວາມໝາຍ, ຄວາມເປັນມາ ແລະ ເຮັດໃຫ້ບໍ່ສາມາດອະທິບາຍເນື້ອໃນມາດຕາໄດ້. ດ້ວຍເຫດຜົນດັ່ງກ່າວ, ນັບແຕ່ປີ 2021 ເປັນຕົ້ນມາ, ໂຄງການໄລຟ໌ໄດ້ມີການພັດທະນາສ້າງຄູ່ມືຝຶກອົບຮົມປະຕິທິນກົດໝາຍ ໂດຍນຳໃຊ້ວິທີການທີ່ມີຄວາມຫຼາກຫຼາຍໃນການເຜີຍແຜ່ ເພື່ອສ້າງຄວາມສົນໃຈໃຫ້ກັບປະຊາຊົນເຂົ້າຮ່ວມກິດຈະກຳ ແລະ ມີຄວາມຮັບຮູ້ເພີ່ມຂຶ້ນກ່ຽວກັບສິດທິຕາມກົດໝາຍໃນຂົງເຂດທີ່ດິນ, ປ່າໄມ້ ແລະ ຊັບພະຍາກອນທຳມະຊາດ.

ດັ່ງນັ້ນ, ປີ 2022 ທາງກຸ່ມແລກປ່ຽນຂໍ້ມູນທາງດ້ານທີ່ດິນ ພ້ອມດ້ວຍທີມງານຜູ້ຜະລິດປະຕິທິນ ຈຶ່ງເຫັນດີໃຫ້ທີມງານຄູຝຶກຂອງໂຄງການໄລຟ໌ ສືບຕໍ່ພັດທະນາສ້າງຄູ່ມືແນະນຳການຝຶກອົບຮົມປະຕິທິນກົດໝາຍປີ 2022 ເພື່ອເປັນຄູ່ມືໃຫ້ກັບນັກວິຊາການ ພັດທະນາຊຸມຊົນ, ຄູ-ອາຈານ, ຜູ້ທີ່ຈະນຳເອົາປະຕິທິນໄປຈັດຕັ້ງປະຕິບັດກິດຈະກຳໃຫ້ແຕ່ລະກຸ່ມເປົ້າໝາຍ ສາມາດອະທິບາຍລຳດັບຂັ້ນຕອນ ເນື້ອໃນສຳຄັນຂອງປະຕິທິນແຕ່ລະຫົວຂໍ້ໄດ້ຢ່າງໝັ້ນໃຈ.

## 2. ຈຸດປະສົງຂອງປະຕິທິນ

ຈຸດປະສົງໃນການສ້າງປະຕິທິນກົດໝາຍ:

- ເພື່ອເຮັດໃຫ້ປະຊາຊົນບັນດາເຜົ່າ ໂດຍສະເພາະເຂດຫ່າງໄກສອກຫຼີກໄດ້ເຂົ້າເຖິງຂໍ້ມູນຂ່າວສານທາງດ້ານກົດໝາຍ ໂດຍຜ່ານຮູບແບບປະຕິທິນ;
- ເພື່ອເປັນເຄື່ອງມືສື່ສານຊ່ວຍສົ່ງເສີມໃຫ້ອົງການປົກຄອງທ້ອງຖິ່ນສາມາດນຳໃຊ້ເພື່ອເປັນເອກະສານອ້າງອີງໄດ້;
- ເພື່ອເຮັດໃຫ້ປະຊາຊົນ ຮູ້ດ້ານຫຼັກການກົດໝາຍ ໃນການປົກປ້ອງສິດຜົນປະໂຫຍດຂອງຕົນ ແລະ ລວມໝູ່, ມີສ່ວນຮ່ວມໃນການພັດທະນາທາງດ້ານທີ່ດິນ ແລະ ຊັບພະຍາກອນທຳມະຊາດ ແບບຍືນຍົງ;

## 3. ຄວາມສໍາຄັນ ແລະ ຄຸນປະໂຫຍດຂອງປະຕິທິນກົດໝາຍ



**<u>ຄວາມສໍາຄັນຂອງປະຕິທິນກົດໝາຍ</u>** ເປັນເຄື່ອງມືສໍາລັບການເຜີຍແຜ່ຂໍ້ມູນໃຫ້ປະຊາຊົນຮັບຮູ້ເຖິງລະບຽບການ ແລະ ເນື້ອໃນ ກໍສາມາດເປັນບ່ອນອີງທາງດ້ານກົດໝາຍ ເພື່ອນໍາໃຊ້ປົກປ້ອງສິດ ແລະ ຜົນປະໂຫຍດຂອງຕົນເອງ.

**<u>ຄຸນປະໂຫຍດຂອງປະຕິທິນ</u>** ຮູບພາບ ແລະ ເນື້ອໃນມາດຕາກົດໝາຍ ທີ່ຢູ່ໃນປະຕິທິນ ແມ່ນສາມາດນໍາໃຊ້ໄດ້ຈົນກວ່າຈະມີການປະກາດຍົກເລີກ ຫຼື ປ່ຽນແປງໃຊ້ກົດໝາຍສະບັບໃໝ່.

ປະຕິທິນແຕ່ລະໜ້າສາມາດນໍາເອົາຮູບພາບ ແລະ ເນື້ອໃນ ດັດປັບເປັນເຄື່ອງມືສື່ສານປະເພດຕ່າງໆໄດ້ເຊັ່ນ: ໂປດສເຕີ້, ແຜ່ນພັບ, ແຜ່ນພົກ ສ້າງເປັນວີດີໂອປະກອບສຽງອ່ານເນື້ອໃນ ແລະ ສັງລວມເປັນປຶ້ມຄູ່ມືປະຕິທິນແຕ່ລະປີ.

## 4. ການນໍາໃຊ້ຄູ່ມືແນະນໍາຝຶກອົບຮົມປະຕິທິນກົດໝາຍ

ຄູ່ມືເຫຼັ້ມນີ້ ໄດ້ເນັ້ນໃສ່ ການຝຶກອົບຮົມໃຫ້ພະນັກງານ ແລະ ການເຜີຍແຜ່ໃຫ້ກັບຊຸມຊົນ ໂດຍນໍາໃຊ້ວິທີການ ແລະ ຮູບແບບທີ່ຫຼາກຫຼາຍ ດັ່ງລຸ່ມນີ້:

### 4.1 ຮູບແບບການຝຶກອົບຮົມ

ຄູ່ມືສະບັບນີ້ ແມ່ນເລັ່ງໃສ່ວິທີການຝຶກອົບຮົມໃຫ້ພະນັກງານ. ຜູ້ທີ່ຈະນໍາເອົາປະຕິທິນໄປເຜີຍແຜ່ສາມາດອອກແບບວາລະ, ບົດນໍາສະເໜີ ແລະ ນໍາໃຊ້ຄຽງຄູ່ກັບຄູ່ມືເຫຼັ້ມນີ້.



1. ສະເໜີປະຫວັດຄວາມເປັນມາຂອງການຜະລິດປະຕິທິນ, ຈຸດປະສົງ (ຈຸດປະສົງຂອງການສ້າງປະຕິທິນ ຫຼື ຈຸດປະສົງຂອງກິດຈະກຳກ່ຽວກັບປະຕິທິນ) ແລະ ຄວາມສຳຄັນຂອງການສ້າງປະຕິທິນເປັນສື່ໂຄສະນາທາງດ້ານກົດໝາຍ.
2. ອະທິບາຍເນື້ອໃນ ແລະ ຄວາມໝາຍຮູບພາບໃນປະຕິທິນ.
3. ແບ່ງກຸ່ມສົນທະນາຖາມ-ຄຳຕອບ ກະຕຸ້ນໃຫ້ມີສ່ວນຮ່ວມ ແລະ ສ້າງຄວາມເຂົ້າໃຈແກ່ກຸ່ມເປົ້າໝາຍ.
4. ການນຳໃຊ້ພາສາທີ່ເຂົ້າໃຈງ່າຍ ແລະ ເໝາະສົມກັບກຸ່ມເປົ້າໝາຍ.
5. ການຫຼິ້ນເກມ ຫຼື ສະແດງລະຄອນທີ່ກ່ຽວພັນກັບເນື້ອໃນຂອງປະຕິທິນ.
6. ຫຼັງຈາກຝຶກອົບຮົມສຳເລັດ, ມອບປະຕິທິນໃຫ້ຜູ້ເຂົ້າຮ່ວມເອົາໄປແຈກຢາຍໃຫ້ປະຊາຊົນທົ່ວໄປເພື່ອນຳໃຊ້.

## 4.2 ຮູບແບບການເຜີຍແຜ່

ການເຜີຍແຜ່ຕໍ່ໃຫ້ກັບຊຸມຊົນຕ້ອງໄດ້ນຳໃຊ້ວິທີການຢູ່ໃນຄູ່ມືເຫຼັ້ມນີ້ເປັນຫຼັກ (ເບິ່ງໄດ້ຢູ່ວິທີການ ແລະ ຄຳແນະນຳສຳລັບຄູຝຶກ) ເພື່ອງ່າຍໃນການຊຸກຍູ້, ຕິດຕາມ ແລະ ປະເມີນຜົນ.



ການເຜີຍແຜ່ ແມ່ນມີຫຼາຍຮູບແບບ ແຕ່ສະເພາະຮູບແບບການເຜີຍແຜ່ປະຕິທິນກົດໝາຍທີ່ຂຽນໃນປຶ້ມຄູ່ມືສະບັບນີ້ ແມ່ນສັງລວມມາຈາກຮູບແບບທີ່ຄູ່ຮ່ວມງານຕ່າງໆໄດ້ນຳໃຊ້ປະຕິບັດກິດຈະກຳຜ່ານມາແຕ່ລະວິທີກໍຂຶ້ນກັບຈຸດປະສົງ ແລະ ເປົ້າໝາຍຂອງແຕ່ລະໂຄງການ. ລາຍລະອຽດດັ່ງລຸ່ມນີ້:

1. ຈັດງານນຳສະເໜີປະຕິທິນປະຈຳປີ ທີ່ນະຄອນຫຼວງວຽງຈັນ (ຂັ້ນສູນກາງ), ພາກເໜືອ ແລະ ພາກໃຕ້.
2. ການເຜີຍແຜ່ທາງສື່ຕ່າງໆ: ເວັບໄຊສ໌, ເຟສບຸກ, ໂທລະພາບ, ວິທະຍຸ, ວີດີໂອ (YouTube) ແລະ ອື່ນໆ.
3. ນຳໃຊ້ແຈກຢາຍໃນໂອກາດຕ່າງໆເຊັ່ນ: ກອງປະຊຸມ, ງານວາງສະແດງ, ງານນິເທດສະການ, ປີໃໝ່.
4. ນຳໃຊ້ແຈກຢາຍທົ່ວໄປໃຫ້ຄູ່ຮ່ວມງານທີ່ມີກຸ່ມເປົ້າໝາຍໂຄງການສະເພາະຢູ່ເຂດຫ່າງໄກສອກຫຼີກທົ່ວປະເທດ.
5. ນຳໃຊ້ເປັນເຄື່ອງມືປະກອບການຮຽນການສອນໃນຂົງເຂດທີ່ດິນ ແລະ ຊັບພະຍາກອນທຳມະຊາດ ຂອງໂຮງຮຽນ ແລະ ມະຫາວິທະຍາໄລ.
6. ຜ່ານກິດຈະກຳເຜີຍແຜ່ໂຄສະນາປະຊາສຳພັນຂອງ ອາສາສະໝັກ, ອົງການຈັດຕັ້ງທາງສັງຄົມ, ອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງລັດ.

7. ຈັດຝຶກອົບຮົມໃຫ້ສະເພາະກຸ່ມ ຊາວກະສິກອນ, ກຸ່ມແມ່ຍິງ, ໄວໜຸ່ມ, ອາສາສະໝັກກົດໝາຍ, ການຈັດຕັ້ງບ້ານ, ຄະນະແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ ແລະ ຜູ້ເຂົ້າຮ່ວມຮຽນກົດໝາຍຊັ້ນຕົ້ນ.
8. ຈັດກິດຈະກຳປູກຝັງຈິດສຳນຶກ ແບບປະຈຳເດືອນ ຫຼື ສາມເດືອນ ອີງຕາມປະຕິທິນມີ 12 ເດືອນ ກໍກຳນົດເອົາ 1-2 ຫົວຂໍ້ ຕໍ່ເດືອນ ຫຼື ເລືອກເອົາວັນສຳຄັນຂອງແຕ່ລະເດືອນທີ່ເຫັນວ່າເໝາະສົມເຂົ້າກັບຫົວຂໍ້ປະຕິທິນ. ຕົວຢ່າງ: ວັນທີ 20 ກໍລະກົດ ແມ່ນວັນສ້າງຕັ້ງສະຫະພັນແມ່ຍິງລາວ ກໍເລືອກເອົາຫົວຂໍ້ ຄວາມສະເໝີພາບຍິງ-ຊາຍ ໃນວຽກງານກະສິກຳ, ການປົກປັກຮັກສາປ່າໄມ້ ແລະ ສິ່ງແວດລ້ອມ (ໃນປະຕິທິນກົດໝາຍປີ 2022) ມາເຮັດກິດຈະກຳເຜີຍແຜ່.

## 5. ອຸປະກອນສຳລັບຈັດຝຶກອົບຮົມ

1. ປະຕິທິນປີ 2022 ຄົບຈຳນວນຜູ້ເຂົ້າຮ່ວມ;
2. ເຈ້ຍຂາວແຜ່ນໃຫຍ່, ສະກັອດເຈ້ຍ, ເຈ້ຍບັດຄຳ, ບິກເຝີດ, ສໍສີ;
3. ປຶ້ມຂຽນ ຄົບຈຳນວນຜູ້ເຂົ້າຮ່ວມ;
4. ບິກຂຽນ ຄົບຈຳນວນຜູ້ເຂົ້າຮ່ວມ;
5. ເອກະສານສັງລວມມາດຕາກົດໝາຍ;
6. ເຄື່ອງສາຍ LCD+ສາຍ HDMI
7. ຄອມພິວເຕີ້
8. ໂປດສເຕີ້ທີ່ກ່ຽວຂ້ອງ
9. ວີດີໂອທີ່ກ່ຽວຂ້ອງ (ສາມາດເບິ່ງໄດ້ໃນແຕ່ລະຫົວຂໍ້)

# II. ພາກເນື້ອໃນປະຕິທິນ

## 1. ຫົວຂໍ້ຫຼັກປະຕິທິນກົດໝາຍ ປີ 2022

1. ການໄດ້ສິດນຳໃຊ້ທີ່ດິນຕາມປະເພນີ
2. ໂລໂກ້ ແລະ ເບີໂທສາຍດ່ວນ
3. ການເຜີຍແຜ່ຂໍ້ມູນຂ່າວສານກ່ຽວກັບໂຄງການພັດທະນາໃຫ້ກັບຊຸມຊົນໃນຮູບແບບຂອງການຍິນຍອມດ້ວຍຄວາມສະໝັກໃຈ ໂດຍໄດ້ຮັບຂໍ້ມູນລ່ວງໜ້າ ແລະ ພຽງພໍ
4. ການມີສ່ວນຮ່ວມຂອງປະຊາຊົນ ໃນການໃຫ້ເຊົ່າ ຫຼື ສຳປະທານທີດິນ ຂອງລັດ
5. ຜົນກະທົບຂອງການປ່ຽນແປງດິນຟ້າອາກາດ ແລະ ຫຼຸດຜ່ອນຄວາມສ່ຽງ
6. ຄວາມສະເໝີພາບຍິງ-ຊາຍ ໃນວຽກງານກະສິກຳ, ການປົກປັກຮັກສາປ່າໄມ້ ແລະ ສິ່ງແວດລ້ອມ
7. ສັນຍາກະສິກຳ
8. ການສືບທອດມູນມໍລະດົກກ່ຽວກັບທີ່ດິນ

## 2. ສັງລວມມາດຕາກົດໝາຍ ແລະ ເອກະສານອ້າງອີງທີ່ກ່ຽວຂ້ອງກັບປະຕິທິນກົດໝາຍປີ 2022

ເອກະສານອ້າງອີງທີ່ນໍາໃຊ້ເຂົ້າໃນຜະລິດປະຕິທິນກົດໝາຍປີ 2022 ແມ່ນໄດ້ຄົ້ນຄວ້າເອົາບາງເນື້ອໃນມາດຕາກົດໝາຍທີ່ກ່ຽວຂ້ອງ ໂດຍຄັດມາຈາກນິຕິກໍາຂອງ ສປປ ລາວ ທັງໝົດ 11 ເອກະສານ ມີດັ່ງລຸ່ມນີ້:

1. ກົດໝາຍວ່າດ້ວຍທີ່ດິນ (ສະບັບປັບປຸງ), ເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019
2. ກົດໝາຍ ວ່າດ້ວຍປ່າໄມ້ (ສະບັບປັບປຸງ), ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019
3. ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ (ສະບັບປັບປຸງ), ສະບັບເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012
4. ກົດໝາຍ ວ່າດ້ວຍຄວາມສະເໝີພາບຍິງ-ຊາຍ, ສະບັບເລກທີ 77/ສພຊ, ລົງວັນທີ 28 ພະຈິກ 2019
5. ກົດໝາຍວ່າດ້ວຍກະສິກໍາ ເລກທີ 01/98 ສພຊ, ລົງວັນທີ 10 ຕຸລາ 1998
6. ປະມວນກົດໝາຍແພ່ງ ເລກທີ 55/ສພຊ, ລົງວັນທີ 6 ທັນວາ 2018
7. ດໍາລັດວ່າດ້ວຍການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ສະບັບເລກທີ 21/ລບ, ລົງວັນທີ 31 ມັງກອນ 2019
8. ດໍາລັດວ່າດ້ວຍ ການປ່ຽນແປງດິນຟ້າອາກາດ, ສະບັບເລກທີ 321/ລບ, ລົງວັນທີ 18 ກັນຍາ 2019
9. ດໍາລັດວ່າດ້ວຍ ການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ຈາກໂຄງການພັດທະນາ ສະບັບເລກທີ 84/ລບ, ລົງວັນທີ 5 ເມສາ 2016
10. ບົດແນະນໍາວ່າດ້ວຍ ການມີສ່ວນຮ່ວມຂອງມວນຊົນ ໃນຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມຂອງໂຄງການລົງທຶນ ສະບັບເລກທີ 707/ກຊສ, ລົງວັນທີ 5 ກຸມພາ 2013
11. ຄໍາແນະນໍາກ່ຽວກັບການພິຈາລະນາອະນຸມັດການລົງທຶນ ແລະ ກົນໄກການຄຸ້ມຄອງທີ່ດິນໃຫ້ເຊົ່າ ຫຼື ສໍາປະທານ ສໍາລັບການປູກພືດກະສິກໍາ ສະບັບເລກທີ 0457/ກຜທ, ລົງວັນທີ 27 ກຸມພາ 2019

## 3. ເນື້ອໃນປະຕິທິນກົດໝາຍປີ 2022

ປະຕິທິນກົດໝາຍປີ 2022 ມີທັງໝົດ 8 ໜ້າ (ລວມທັງໜ້າປົກ, ໜ້າໂລໂກ້ ແລະ ເບີໂທສາຍດ່ວນ ແລະ ຫົວຂໍ້ຕ່າງໆ).

ແຕ່ລະຫົວຂໍ້ ໄດ້ອະທິບາຍຄວາມໝາຍຂອງຮູບແຕ້ມ, ວິທີການ, ຄໍາແນະນໍາສໍາລັບຄູຝຶກ, ເນື້ອໃນເອກະສານອ້າງອີງ ແລະ ຂໍ້ມູນເພີ່ມເຕີມ.

## 3.1 ໜ້າທີ 1 ໜ້າປົກປະຕິທິນ ການໄດ້ສິດນຳໃຊ້ທີ່ດິນຕາມປະເພນີ




### ອະທິບາຍຮູບພາບ

ໜ້າປົກຂອງປະຕິທິນປີ 2022 ໝາຍເຖິງ ການໄດ້ສິດນຳໃຊ້ທີ່ດິນຕາມປະເພນີ ໂດຍສະເພາະແມ່ນການໄດ້ສິດນຳໃຊ້ທີ່ດິນຈາກການຄອບຄອງ ແລະ ນຳໃຊ້ທີ່ດິນຂອງພົນລະເມືອງລາວ ດ້ວຍການບຸກເບີກ, ການພັດທະນາ ການປົກປັກຮັກສາ ແລະ ການນຳໃຊ້ທີ່ດິນຢ່າງເປັນປົກກະຕິ ເປັນເວລາຫຼາຍກ່ວາ ຊາວປີ ແລະ ໄດ້ຮັບການຢັ້ງຢືນຈາກອົງການປົກຄອງບ້ານ ແລະ ເຈົ້າຂອງສິດນຳໃຊ້ທີ່ດິນຂ້າງຄຽງ ເຊິ່ງມີພາບປະກອບດັ່ງນີ້:

**ຮູບວົງມົນນ້ອຍ 3 ວົງ ສື່ເຖິງ:**

- ຮູບການບຸກເບີກແມ່ນ: ຮູບພາບປະຊາຊົນກຳລັງບຸກເບີກພື້ນທີ່ດິນເພື່ອທຳການຜະລິດ.
- ຮູບການພັດທະນາແມ່ນ: ປະຊາຊົນກຳລັງຂະຫຍາຍພື້ນທີ່ທຳການຜະລິດ.
- ຮູບການປົກປັກຮັກສາ ແລະ ນຳໃຊ້: ປະຊາຊົນກຳລັງບູລະນະ ແລະ ປົກປັກຮັກສາເຂດທຳການຜະລິດ.

ຮູບໃຫຍ່: ແມ່ນຮູບພະນັກງານທີ່ດິນກຳລັງສົນທະນາກັບເຈົ້າຂອງທີ່ດິນ, ນາຍບ້ານ ແລະ ເຈົ້າຂອງທີ່ດິນຂ້າງຄຽງ ກ່ຽວກັບການໄດ້ຮັບສິດນຳໃຊ້ທີ່ດິນຕອນດັ່ງກ່າວດ້ວຍການບຸກເບີກ, ການພັດທະນາ, ການປົກປັກຮັກສາ ແລະ ນຳໃຊ້ມາໄດ້ ຊາວປີແລ້ວ, ໂດຍບໍ່ມີເອກະສານຢັ້ງຢືນການໄດ້ມາຂອງທີ່ດິນ ແຕ່ນາຍບ້ານ ແລະ ເຈົ້າຂອງທີ່ດິນຂ້າງຄຽງ ສາມາດຢັ້ງຢືນໃຫ້.

## ວິທີການ



- ແບ່ງກຸ່ມຜູ້ເຂົ້າຮ່ວມອອກເປັນ 3 ກຸ່ມ. ຫຼັງຈາກນັ້ນ ໃຫ້ແຕ່ລະກຸ່ມແຕ້ມຮູບ ຫຼື ຂຽນເປັນຕົວໜັງສື ໂດຍໃຊ້ຄຳຖາມ **ຕາມປະສົບການຜ່ານມາຂອງທ່ານກ່ຽວກັບການນຳໃຊ້ທີ່ດິນຕາມປະເພນີໃນຊຸມຊົນ ຫຼື ເຂດບ້ານເປົ້າໝາຍຂອງທ່ານເປັນແນວໃດ?**
- **ທ່ານຄິດວ່າເຮົາຄວນຈະເນັ້ນໜັກຫຍັງຕື່ມໃນເວລາອະທິບາຍຫົວຂໍ້ການໄດ້ສິດນຳໃຊ້ທີ່ດິນຕາມປະເພນີໃຫ້ກັບຊຸມຊົນ?**
- ພາຍຫຼັງແຕ່ລະກຸ່ມເຮັດວຽກແລ້ວ ສາມາດໄປເບິ່ງກຸ່ມອື່ນ ແລະ ສົນທະນາໄດ້.
- ສຸດທ້າຍ ເປີດວິດີໂອ ຂ່າວດີ ແລະ ອ້າງອີງກົດໝາຍທີ່ດິນ ສະບັບປັບປຸງ ມາດຕາ 130 (ໃໝ່)

## ຄຳແນະນຳສຳລັບຄູຝຶກ

1. ຊຸກຍູ້ໃຫ້ປະຊາຊົນມີສ່ວນຮ່ວມ ໂດຍການຕັ້ງຄຳຖາມວ່າ: ກົດໝາຍຮັບຮູ້ການນຳໃຊ້ສິດທີ່ດິນຕາມປະເພນີ ຫຼື ບໍ່? ການນຳໃຊ້ທີ່ດິນໃນບ້ານເຮົາເປັນແນວໃດ? ເຊິ່ງຄຳຖາມເປັນການມີສ່ວນຮ່ວມແລກປ່ຽນຄຳຄິດເຫັນນຳກັນ.
2. ນຳໃຊ້ໂພສເຕີ ການນຳໃຊ້ດິນຕາມປະເພນີ ຂຶ້ນມາໃຫ້ເຂົາເຈົ້າເບິ່ງວ່າມີການນຳໃຊ້ຄືກັນກັບໃນຮູບພາບບໍ່ ແລ້ວສົນທະນາ.
3. ເພື່ອໃຫ້ເຂົ້າໃຈແຈ້ງຕື່ມ ໃຫ້ຜູ້ເຂົ້າຮ່ວມແຕ້ມຮູບໃສ່ເຈ້ຍບັດຄຳ ແລະ ແນະນຳວ່າ:
   - ຖ້າໃຜມີດິນຫຼາຍຕອນກໍເຮັດຫຼາຍຕອນກໍໄດ້, ຕອນໃດມີໃບຕາດິນ (ກໍເຮັດເປັນຮູບສີ່ຫຼ່ຽມ);
   - ຕອນໃດບໍ່ມີເອກະສານຫຍັງ (ໃສ່ສັນຍາລັກ ວົງມົນ ແລະ ຖາມວ່ານຳໃຊ້ມາແຕ່ປີໃດ ແລ້ວເຮັດຫຍັງແດ່ໃນຕອນດິນດັ່ງກ່າວ)?
   - ຕອນໃດທີ່ມີເອກະສານອື່ນໆ (ເຮັດເປັນຮູບ ສາມຫຼ່ຽມ ແລະ ຖາມວ່າ ມີເອກະສານຫຍັງແນ່ ດິນຕອນນັ້ນໄດ້ເຮັດຫຍັງ?)

ເຊິ່ງກິດຈະກຳເຫຼົ່ານີ້ ຢາກສື່ໃຫ້ເຫັນຜ່ານຮູບແຕ້ມທີ່ເຂົາເຈົ້າເຮັດ ແລະ ເຮົາກໍສາມາດເຊື່ອມໂຍງເຂົ້າກັບກົດໝາຍໄດ້ງ່າຍຂຶ້ນ ໂດຍທີ່ບໍ່ໃຫ້ເຂົາເຈົ້າຄິດວ່າແມ່ນເລື່ອງໄກຕົວ ໂດຍສະເພາະກ່ຽວກັບກົດໝາຍໃນມາດຕາ 130.

## ເນື້ອໃນເອກະສານອ້າງອີງ

**ກົດໝາຍວ່າດ້ວຍທີ່ດິນ (ສະບັບປັບປຸງ), ເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019**

**ມາດຕາ 130 (ໃໝ່) ການໄດ້ສິດນຳໃຊ້ທີ່ດິນຕາມປະເພນີ**

ການໄດ້ສິດນຳໃຊ້ທີ່ດິນຕາມປະເພນີ ແມ່ນ ການໄດ້ສິດນຳໃຊ້ທີ່ດິນຈາກການຄອບຄອງ ແລະ ນຳໃຊ້ທີ່ດິນຂອງພົນລະເມືອງລາວ ດ້ວຍການບຸກເບີກ, ພັດທະນາ, ປົກປັກຮັກສາ ແລະ ນຳໃຊ້ທີ່ດິນ ຢ່າງເປັນປົກກະຕິເປັນເວລາຫຼາຍກວ່າ ຊາວປີ ກ່ອນກົດໝາຍສະບັບນີ້ມີຜົນສັກສິດ ໂດຍບໍ່ມີເອກະສານໃດຢັ້ງຢືນການໄດ້ມາທີ່ດິນນັ້ນ ແຕ່ມີການຢັ້ງຢືນຈາກອົງການປົກຄອງບ້ານ ແລະ ເຈົ້າຂອງສິດນຳໃຊ້ທີ່ດິນຂ້າງຄຽງ ກ່ຽວກັບການເຂົ້າຄອບຄອງ ແລະ ນຳໃຊ້ທີ່ດິນນັ້ນຢ່າງຕໍ່ເນື່ອງ ໂດຍບໍ່ມີຂໍ້ຂັດແຍ່ງ ຫຼື ມີຂໍ້ຂັດແຍ່ງ ແຕ່ກໍໄດ້ຮັບການແກ້ໄຂແລ້ວ.

ໃນໄລຍະທີ່ຍັງບໍ່ທັນໄດ້ຂຶ້ນທະບຽນອອກໃບຕາດິນໃຫ້ບຸກຄົນເທື່ອນັ້ນ ລັດ ຮັບຮູ້ ແລະ ປົກປ້ອງສິດນຳໃຊ້ທີ່ດິນຕາມປະເພນີຂອງຜູ້ກ່ຽວ ແລະ ດຳເນີນການຂຶ້ນທະບຽນອອກໃບຕາດິນໃຫ້ຕາມກົດໝາຍ.

## <u>ຂໍ້ມູນເພີ່ມເຕີມ</u>

- ການໄດ້ຮັບສິດນຳໃຊ້ທີ່ດິນຕາມປະເພນີ ສາມາດອ່ານເບິ່ງເພີ່ມເຕີມໄດ້ທີ່ https://bit.ly/3jah9p1
- ບົດຄົ້ນຄວ້າ ແມ່ຍິງ ແລະ ສິດນຳໃຊ້ທີ່ດິນຢູ່ ສປປ ລາວ ຕາມລິ້ງນີ້: https://bit.ly/37ic4Hh ແລະ ສົນໃຈຝຶກອົບຮົມສາມາດຕິດຕໍ່ມາຫາອົງການໄລຟ໌ໄດ້.

## 3.2 ໜ້າທີ 2: ເບີສາຍດ່ວນ ແລະ ໂລໂກ້ກາໝາຍ




ໜ້າທີ 2 ຂອງປະຕິທິນ ແມ່ນສຳລັບໃສ່ໂລໂກ້ອົງການ ຜູ້ຜະລິດ ແລະ ລາຍຊື່ທີມງານ, ພາກສ່ວນທີ່ສະໜັບສະໜູນ (ພາກລັດ) ແລະ ໂລໂກ້ອົງການຈັດຕັ້ງສາກົນ, ອົງການຈັດຕັ້ງທາງສັງຄົມ ແລະ ຄູ່ຮ່ວມພັດທະນາ ແລະ ບັນດາເບີໂທສາຍດ່ວນ.

ບັນດາທ່ານສາມາດເບິ່ງໂລໂກ້ຂອງແຕ່ລະອົງການ ແລະ ພາກສ່ວນລັດໄດ້ຕາມທີ່ລະບຸໄວ້ໃນປະຕິທິນໜ້ານີ້ ພ້ອມທັງໄດ້ມີການແນະນຳເບີສາຍດ່ວນວ່າມີພາກສ່ວນໃດແນ່ທີ່ຮັບຜິດຊອບກ່ຽວກັບແຕ່ລະວຽກງານທີ່ມີຢູ່ໃນໜ້າປະຕິທິນ.

## 3.3 ໜ້າທີ 3: ການເຜີຍແຜ່ຂໍ້ມູນຂ່າວສານກ່ຽວກັບໂຄງການພັດທະນາໃຫ້ກັບຊຸມຊົນໃນຮູບແບບຂອງການຍິນຍອມດ້ວຍຄວາມສະໝັກໃຈ ໂດຍໄດ້ຮັບຂໍ້ມູນລ່ວງໜ້າ ແລະ ພຽງພໍ




**ອະທິບາຍຮູບພາບ**

ພາບລວມ ສະແດງເຖິງ ການຮັບຮູ້ຂ່າວສານຂອງຊຸມຊົນ ເພື່ອໃຫ້ເກີດມີການຕັດສິນໃຈຮ່ວມກັນກ່ອນເກີດມີໂຄງການໃດໜຶ່ງ ໂດຍບໍ່ມີການຈຳແນກເພດ, ຊົນຊັ້ນ, ສາສະໜາ ແລະ ອື່ນໆ. ການເຜີຍແຜ່ຂໍ້ມູນຂ່າວສານກ່ຽວກັບໂຄງການພັດທະນາ ຕ້ອງແຈ້ງຂໍ້ມູນຂ່າວສານ ກ່ຽວກັບ ຈຸດປະສົງ, ແຜນພັດທະນາໂຄງການລົງທຶນ, ຜົນປະໂຫຍດທີ່ຈະໄດ້ຮັບ ແລະ ຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ທີ່ຈະເກີດຈາກໂຄງການລົງທຶນ ເພື່ອຮັບປະກັນຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນກວ່າເກົ່າ. ໂດຍຜູ້ພັດທະນາໂຄງການຕ້ອງປະຕິບັດດ້ວຍວິທີການເຜີຍແຜ່ດັ່ງນີ້ ເປັນຕົ້ນ:

ຮູບພາບໃຫ່ຍທາງກາງ: ເປັນການເຜີຍແຜ່ຂໍ້ມູນ ໂດຍແມ່ນພະນັກງານໂຄງການທີ່ຮັບຜິດຊອບເປັນຜູ້ມາອະທິບາຍ ຜົນດີ ຜົນເສຍ ຈາກການທີ່ຈະມີໂຄງການພັດທະນາໃດໜຶ່ງເກີດຂຶ້ນ, ສ່ວນຮູບໃຫ່ຍທາງເທິງຈະສື່ໃຫ້ເຫັນເຖິງໂຄງການພັດທະນາທີ່ຈະເກີດຂຶ້ນໃນບ້ານຂອງເຂົາເຈົ້າ ແລະ ລາວຍັງບອກອີກວ່າ ຍັງໄດ້ເຜີຍແຜ່ຢູ່ທາງສື່ຕ່າງໆໃຜສະດວກເຂົ້າເບິ່ງໄດ້;

ຮູບຊ້າຍມື: ແມ່ນວິທີການເຜີຍແຜ່ໃນຫ້ອງສະໝຸດ, ໜັງສືພິມ ແລະ ວາລະສານ

ຮູບຊ້າຍມືເຄິ່ງກາງ: ແມ່ນເຜີຍແຜ່ທາງວິທະຍຸ

ຮູບຊ້າຍມືເທິງສຸດ: ແມ່ນເຜີຍແຜ່ທາງໂທລະພາບ

ຮູບຂວາມືເທິງສຸດ: ແມ່ນເຜີຍແຜ່ທາງສື່ສັງຄົມຕ່າງໆ ເປັນຕົ້ນ YouTube, Facebook, Website, …..

ຮູບຂວາມືເຄິ່ງກາງ: ແມ່ນເຜີຍແຜ່ທາງໂທລະໂຄ່ງ

ຮູບຂວາມື: ແມ່ນການຕິດປະກາດໃສ່ກະດານຂ່າວຂອງຫ້ອງການບ້ານ

ສ່ວນຮູບທາງກາງທີ່ມີຄົນຍືນລຽນແຖວກັນຢູ່: ສະແດງເຖິງ ການມີໂຄງການພັດທະນາໃດໜຶ່ງທຸກໆຄົນທີ່ຢູ່ໃນສະຖານທີ່ແຫ່ງນັ້ນ ບໍ່ວ່າຈະເປັນ ເດັກນ້ອຍ ຜູ້ໃຫ່ຍ ຜູ້ເຖົ້າ ຄົນພິການ ຄົນບໍ່ຮູ້ໜັງສື ຫຼື ວ່າຄົນຊົນເຜົ່າ ທຸກຄົນລ້ວນແຕ່ມີສິດໄດ້ຮັບຮູ້ຂໍ້ມູນ ໂດຍທີ່ບໍ່ມີການປະຖິ້ມຜູ້ໃດຜູ້ໜຶ່ງ.

## ວິທີການ

- ສະແດງລະຄອນໄບ້ ຂໍອາສາສະໝັກ ອອກມາສະແດງ ໂດຍສົມມຸດວ່າ ຜູ້ທີ່ຈະສະແດງ ໃນຖານະເປັນເຈົ້າຂອງໂຄງການແມ່ນເຮັດແນວໃດ ກ່ຽວກັບຜົນກະທົບ ຫຼື ໂຄງການທີ່ຈະເກີດຂຶ້ນ ເພື່ອຈະໃຫ້ປະຊາຊົນເຂົ້າໃຈຕໍ່ກັບໂຄງການດັ່ງກ່າວ;
- ການສະແດງເທື່ອທໍາອິດແມ່ນຈະໃຫ້ສະແດງໂດຍ ບໍ່ມີການອອກສຽງ ແລະ ຕ້ອງເຮັດພຽງແຕ່ 3 ສາກແບບຕໍ່ເນື່ອງກັນ, ຫຼັງຈາກນັ້ນ ໃຫ້ຜູ້ຊົມ ຕິດຕາມວ່າກໍາລັງເຮັດຫຍັງ ແລະ ປະກອບຄໍາຄິດເຫັນ;
- ສະແດງເທື່ອທີສອງ ແມ່ນໃຫ້ເວົ້າອອກສຽງວ່າ ຜູ້ສະແດງຈະສື່ເຖິງຫຍັງ?
- ຫຼັງຈາກນັ້ນ ແມ່ນສະຫຼຸບກິດຈະກໍາ ໃນເລື່ອງຂອງການເຜີຍແຜ່ຂໍ້ມູນໃຫ້ກັບປະຊາຊົນເພື່ອຮັບປະກັນວ່າເຂົາເຈົ້າຕ້ອງມີຄວາມເຂົ້າໃຈ ແລະ ຮັບປະກັນສິດທິພື້ນຖານທີ່ທຸກຄົນມີ ແລະ ອ້າງອີງມາດຕາກົດໝາຍ.

## ຄໍາແນະນໍາສໍາລັບຄູຝຶກ

- ການນໍາໃຊ້ກິດຈະກໍາດັ່ງກ່າວ ເວລາລົງບ້ານ ສາມາດໃຫ້ທີມງານຊ່ວຍສະແດງທ່າທາງ ເພາະຈະງ່າຍກ່ວາທີ່ຈະຂໍອາສາສະໝັກຂຶ້ນເວທີສະແດງ ແລະ ໃຫ້ເຂົາເຈົ້າມີສ່ວນຮ່ວມໃນການສົນທະນາ. ນອກຈາກນີ້, ກໍລະນີມີຜູ້ທີ່ຫູບໍ່ໄດ້ຍິນເຂົ້າຮ່ວມນໍາກໍເຮັດໃຫ້ເຂົາເຈົ້າສາມາດເຂົ້າໃຈໄດ້ ແລະ ເນັ້ນໜັກໃຫ້ເຫັນເຖິງຮູບແບບໃນການເຜີຍແຜ່ໃຫ້ກັບຊຸມຊົນໄດ້ຮັບຮູ້ຮ່ວມ ແລະ ເຂົ້າໃຈໄດ້ກ່ອນຈະມີການຕັດສິນໃຈ.
- ຖ້າຫາກການສະແດງບົດບາດສົມມຸດໃນຮູບແບບລະຄອນໄບ້ ຍັງບໍ່ສາມາດສ້າງຄວາມເຂົ້າໃຈໃຫ້ກັບຜູ້ເຂົ້າຮ່ວມໃນຂັ້ນບ້ານ, ຂັ້ນຊຸມຊົນ ແມ່ນແນະນໍາໃຫ້ສະແດງຄືນພ້ອມທັງນໍາໃຊ້ເຄື່ອງມືປະກອບທີ່ສື່ເຖິງຄວາມໝາຍໃນຫົວຂໍ້ນັ້ນໆ.

## ເນື້ອໃນເອກະສານອ້າງອີງ

**ບົດແນະນຳວ່າດ້ວຍ ການມີສ່ວນຮ່ວມຂອງມວນຊົນ ໃນຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ຂອງໂຄງການລົງທຶນ ສະບັບເລກທີ 707/ກຊສ, ລົງວັນທີ 5 ກຸມພາ 2013**

**ພາກທີ IV ວິທີການດຳເນີນການມີສ່ວນຮ່ວມຂອງມວນຊົນ**

**1. ການເຜີຍແຜ່ຂໍ້ມູນ**

ຜູ້ພັດທະນາໂຄງການ ຕ້ອງແຈ້ງຂໍ້ມູນຂ່າວສານ ກ່ຽວກັບ ແຜນພັດທະນາໂຄງການລົງທຶນ, ຜົນປະໂຫຍດທີ່ຈະໄດ້ຮັບ ແລະ ຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ທີ່ຈະເກີດຈາກໂຄງການລົງທຶນ ໃຫ້ປະຊາຊົນຜູ້ໄດ້ຮັບຜົນກະທົບຈາກໂຄງການລົງທຶນ ແລະ ຜູ້ມີສ່ວນຮ່ວມອື່ນໆ ຊາບ ລວມທັງຂໍ້ມູນ ກ່ຽວກັບ ບົດລາຍງານ ການສຶກສາສິ່ງແວດລ້ອມເບື້ອງຕົ້ນ ຫຼື ບົດລາຍງານ ການປະເມີນຜົນກະທົບສິ່ງແວດລ້ອມ, ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ, ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ. ຈຸດປະສົງຂອງການເຜີຍແຜ່ຂໍ້ມູນ ແມ່ນເພື່ອນຳສະເໜີຂໍ້ມູນໃຫ້ແກ່ປະຊາຊົນໃນເຂດທ້ອງຖິ່ນ ໂດຍສະເພາະ ບ້ານທີ່ມີໂຄງການຕັ້ງຢູ່ ແລະ ຜູ້ທີ່ມີສ່ວນຮ່ວມອື່ນໆ ຮັບຊາບເຖິງຜົນກະທົບທີ່ເກີດ ຫຼື ຈະເກີດຂຶ້ນ ຕໍ່ສິ່ງແວດລ້ອມ ແລະ ສັງຄົມ ແລະ ໄດ້ຮັບຂໍ້ມູນ ກ່ຽວກັບ ຄວາມຄືບໜ້າຂອງໂຄງການ ໃນແຕ່ລະໄລຍະ.

ການເຜີຍແຜ່ຂໍ້ມູນໃຫ້ມວນຊົນ, ຜູ້ພັດທະນາໂຄງການ ອາດປະຕິບັດໄດ້ດ້ວຍວິທີການໃດໜຶ່ງ ຫຼື ຫຼາຍວິທີ ດັ່ງລຸ່ມນີ້:

- ການເຜີຍແຜ່ຂໍ້ມູນເອກະສານ;
- ການເຜີຍແຜ່ຂໍ້ມູນຜ່ານສື່;
- ການຖະແຫຼງຂ່າວ;
- ສູນຂໍ້ມູນຂ່າວສານ ແລະ ປະຊາສຳພັນ;
- ກະດານຂ່າວ;
- ການທັດສະນະສຶກສາຢ້ຽມຢາມໂຄງການ.

**ດຳລັດວ່າດ້ວຍການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ສະບັບເລກທີ 21/ລບ, ລົງວັນທີ 31 ມັງກອນ 2019**

**ມາດຕາ 36 ການມີສ່ວນຮ່ວມຂອງສັງຄົມ**

ການມີສ່ວນຮ່ວມຂອງສັງຄົມ ແມ່ນຂະບວນການປຶກສາຫາລື, ການສະໜອງຂໍ້ມູນຂ່າວສານ ແລະ ຮັບຄຳຄິດຄຳເຫັນ ຂອງທຸກພາກສ່ວນຂອງສັງຄົມ ກ່ຽວກັບໂຄງການລົງທຶນ ແລະ ກິດຈະການຕ່າງໆ ໃນໄລຍະສ້າງ ແລະ ພິຈາລະນາບົດສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ, ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ແລະ ແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ພ້ອມທັງຕິດຕາມກວດກາການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງສິ່ງແວດລ້ອມ ໃນແຕ່ລະໄລຍະ ຂອງໂຄງການລົງທຶນ ແລະ ກິດຈະການຕ່າງໆ ເພື່ອຮັບປະກັນຄວາມໂປ່ງໃສ, ຍຸຕິທຳ ແລະ ມີປະສິດທິຜົນ.

ການມີສ່ວນຮ່ວມຂອງສັງຄົມມີໄລຍະດັ່ງນີ້:

1. ການກະກຽມ ແລະ ວາງແຜນໂຄງການ;
2. ການກໍ່ສ້າງ ແລະ ດຳເນີນໂຄງການ;
3. ການສິ້ນສຸດໂຄງການ.

ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຂະແໜງການທີ່ຮັບຜິດຊອບໂຄງການລົງທຶນ,ອົງການປົກຄອງທ້ອງຖິ່ນ ແລະ ເຈົ້າຂອງໂຄງການ ມີຄວາມຮັບຜິດຊອບຮ່ວມກັນ ໃນການຮັບປະກັນ ແລະ ສ້າງເງື່ອນໄຂໃຫ້ທຸກພາກສ່ວນໃນສັງຄົມ ມີສ່ວນຮ່ວມໃນວຽກງານປະເມີນຜົນກະທົບຕໍ່ສິ່ງແວດລ້ອມ. ເຈົ້າຂອງໂຄງການ ຕ້ອງສ້າງແຜນການການມີສ່ວນຮ່ວມຂອງສັງຄົມ ໃນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມໃນແຕ່ລະໄລຍະ ພ້ອມທັງສ້າງບົດສຶກສາວິໄຈການມີສ່ວນຮ່ວມຂອງສັງຄົມ ໂດຍສະເພາະກ່ຽວກັບຊົນເຜົ່າ, ບົດບາດຍິງ-ຊາຍ, ກຸ່ມຄົນທີ່ບໍ່ສາມາດຊ່ວຍເຫຼືອໂຕເອງໄດ້ ແລະ ກຸ່ມຄົນດ້ອຍໂອກາດທີ່ໄດ້ຮັບຜົນກະທົບຈາກໂຄງການລົງທຶນ ແລະ ກິດຈະການຕ່າງໆ.

## <u>ຂໍ້ມູນເພີ່ມເຕີມ</u>

- ທ່ານສາມາດເຂົ້າເບິ່ງວິດີໂອ 'ການເຈລະຈາຕໍ່ລອງ ພາຍໃຕ້ຄວາມຍຸຕິທຳ' ໂດຍ ອົງການ ບ້ານຈຸດສຸມສາກົນ
- ປຶ້ມຄູ່ມືແນະນຳການລົງທຶນ ດ້ານກະສິກຳ ແລະ ປ່າໄມ້ ແບບມີຄວາມຮັບຜິດຊອບ (RAI)

## 3.4 ໜ້າທີ 4: ການມີສ່ວນຮ່ວມຂອງປະຊາຊົນ ໃນການໃຫ້ເຊົ່າ ຫຼື ສຳປະທານທີ່ດິນຂອງລັດ




### ອະທິບາຍຮູບພາບ

ຮູບພາບນີ້ໂດຍລວມແມ່ນສື່ໃຫ້ເຫັນການມີສ່ວນຮ່ວມຂອງປະຊາຊົນທີ່ຫຼາກຫຼາຍ ໃນການໃຫ້ເຊົ່າ ຫຼື ສຳປະທານ ທີ່ດິນ ເພື່ອສົ່ງເສີມຮັບປະກັນການມີສ່ວນຮ່ວມຂອງປະຊາຊົນ ໃນຂະບວນການດຳເນີນກິດຈະການເຊົ່າ ຫຼື ສຳປະທານທີ່ດິນ, ເນື່ອງຈາກເຂົາເຈົ້າເປັນຜູ້ທີ່ຢູ່ໃນທ້ອງຖິ່ນ ເຊິ່ງຈະໄດ້ຮັບຜົນປະໂຫຍດ ແລະ ຜົນກະທົບ ໂດຍກົງ ປະຊາຊົນຈຶ່ງຄວນຮັບຮູ້ຂໍ້ມູນຕ່າງໆ ແລະ ມີສ່ວນຮ່ວມໃນການຕັດສິນໃຈ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງຕົນເອງ ແລະ ຊຸມຊົນ. . ນອກນັ້ນ, ແມ່ນພັນທະຕ່າງໆຂອງຜູ້ເຊົ່າ ຫຼື ຜູ້ສຳປະທານ ຕ້ອງປະຕິບັດຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ເງື່ອນໄຂຂອງສັນຍາ.

- **ຮູບພາບເຄິ່ງກາງ:** ເປັນຮູບພາບຫຼັກ ທີ່ຢາກສື່ສານ ເຊິ່ງແມ່ນຮູບພາບກ່ຽວກັບປະຊາຊົນເຂົ້າຮ່ວມປະຊຸມຟັງຜູ້ລົງທຶນ (ຕາງໜ້າບໍລິສັດ) ນຳສະເໜີຂໍ້ມູນໂຄງການ, ສະແດງເຖິງການມີສ່ວນຮ່ວມໃນການສຶກສາຄວາມເປັນໄປໄດ້ ຂອງໂຄງການ ບໍ່ວ່າຈະເປັນໂຄງການຂະໜາດໃດກໍຕາມ, ເຊິ່ງເປັນພັນທະໜຶ່ງຂອງຜູ້ລົງທຶນ ທີ່ຕ້ອງໄດ້ໃຫ້ຂໍ້ມູນກ່ຽວກັບ ຜົນປະໂຫຍດທີ່ຈະໄດ້ຮັບ ແລະ ຜົນກະທົບທີ່ອາດຈະເກີດຂຶ້ນເມື່ອມີໂຄງການ, ເປັນກອງປະຊຸມທີ່ເປີດໂອກາດໃຫ້ປະຊາຊົນໄດ້ມີການປຶກສາຫາລືຮ່ວມກັນຢູ່ພາຍໃນຊຸມຊົນ ໂດຍບໍ່ຈຳແນກຍິງ-ຊາຍ, ສາມາດຕັ້ງຄຳຖາມແລກປ່ຽນຄຳຄິດເຫັນ ແລະ ຂໍ້ສະເໜີຕ່າງໆຕໍ່ຜູ້ລົງທຶນ, ມີສ່ວນຮ່ວມໃນການຕັດສິນໃຈ ບົນພື້ນຖານສິດ ແລະ ຜົນປະໂຫຍດຂອງປະຊາຊົນທີ່ອາໄສຢູ່ຊຸມຊົນທີ່ໂຄງການຈະດຳເນີນກິດຈະການ ເພື່ອຮັບປະກັນແຫຼ່ງທຳມາຫາກິນຂອງຄົນໃນຊຸມຊົນ.

- **ຮູບພາບເບື້ອງຊ້າຍເທິງຂໍ້ຄວາມ ຜົນປະໂຫຍດທີ່ຈະໄດ້ຮັບຈາກໂຄງການ:** ຢາກສື່ຄວາມໝາຍເຖິງ ຜົນປະໂຫຍດ ທີ່ປະຊົນຊົນຈະໄດ້ຮັບຈາກໂຄງການເຊັ່ນ: ການມີວຽກເຮັດງານທຳ, ການໄດ້ຮັບການຊ່ວຍເຫຼືອດ້ານເຕັກນິກວິຊາການ, ຄວາມຮູ້ດ້ານການຜະລິດກະສິກຳ, ການຈັດການກັບບັນຫາທີ່ອາດຈະເກີດຂຶ້ນໃນລະຫວ່າງການດຳເນີນກິດຈະການ, ການໄດ້ຮັບຄວາມຊ່ວຍເຫຼືອດ້ານອື່ນໆ ເຊິ່ງຈະເປັນການສ້າງຄວາມໝັ້ນໃຈໃຫ້ຊາວບ້ານ;

- **ຮູບພາບເບື້ອງຂວາມືເທິງຂໍ້ຄວາມ ຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ:** ພາບສ່ວນນີ້ແມ່ນສະແດງເຖິງ ການໄດ້ຮັບຜົນກະທົບຈາກວິຖີຊີວິດເດີມເຊັ່ນ: ການທຳມາຫາກິນ, ການເກັບເຄື່ອງປ່າຂອງດົງຂອງຊາວບ້ານ ທີ່ຕິດພັນກັບພື້ນທີ່ດັ່ງກ່າວ ມີປ້າຍຫ້າມເຂົ້າເຂດສຳປະທານ ເຮັດໃຫ້ຊາວບ້ານບໍ່ສາມາດເຂົ້າໄປນຳໃຊ້ໄດ້ຕາມປົກກະຕິຄືດັ່ງທີ່ຜ່ານມາ, ຮູບພາບນີ້ຢາກໃຫ້ປະຊາຊົນໄດ້ມີການຄົ້ນຄິດຫາທາງອອກ ແລະ ຕັ້ງຄຳຖາມກ່ຽວກັບບັນຫາດັ່ງກ່າວ ເພື່ອຮັບປະກັນແຫຼ່ງທຳມາຫາກິນຂອງປະຊາຊົນໃຫ້ຍືນຍົງ;

**ນອກຈາກນີ້, ຢູ່ລຸ່ມສຸດຈະເຫັນຮູບນ້ອຍ ສີ່ ຮູບ ພ້ອມກັບຂໍ້ຄວາມກຳກັບຢູ່ທາງລຸ່ມກ້ອງຮູບ. ທັງໝົດແມ່ນສັງລວມມາຈາກ ມາດຕາ 122 (ປັບປຸງ) ພັນທະຂອງຜູ້ເຊົ່າ ຫຼື ຜູ້ສຳປະທານ, ກົດໝາຍທີ່ດິນ (ສະບັບປັບປຸງ) ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019 ລາຍລະອຽດດັ່ງລຸ່ມນີ້:**

- **ຮູບພາບເບື້ອງລຸ່ມນັບຈາກຊ້າຍຫາຂວາເປັນຮູບທີ 1:** ການນຳໃຊ້ທີ່ດິນໃຫ້ຖືກຕ້ອງຕາມເປົ້າໝາຍ ສື່ເຖິງພັນທະຂອງຜູ້ເຊົ່າສຳປະທານ ທີ່ຕ້ອງໄດ້ນຳໃຊ້ທີ່ດິນໃຫ້ຖືກຕ້ອງຕາມເປົ້າໝາຍ ແລະ ກິດຈະການທີ່ຕົນໄດ້ຮັບອະນຸຍາດໃຫ້ລົງທຶນ ເພື່ອຮັບປະກັນວ່າ ທີ່ດິນຈະບໍ່ຖືກປ່ຽນເປົ້າໝາຍໄປເຮັດກິດຈະການອື່ນ: ຕົວຢ່າງຜູ້ລົງທຶນ (ຜູ້ເຊົ່າ) ເຊົ່າທີ່ດິນນາ ຫຼື ດິນສວນ ເພື່ອທຳການຜະລິດກະສິກຳ ພາຍຫຼັງດຳເນີນກິດຈະກຳພັດປ່ຽນປະເພດກິດຈະການເປັນໂຮງຈັກໂຮງງານ (ອຸດສາຫະກຳ).

- **ຮູບພາບທີ 2 ເບື້ອງລຸ່ມ:** ສື່ເຖິງການປະຕິບັດພັນທະ ຂອງນາຍທຶນ ທີ່ຕ້ອງໄດ້ປະຕິບັດຕໍ່ລັດກໍຄື ການເສຍຄ່າເຊົ່າ ຫຼື ຄ່າສຳປະທານທີ່ດິນ, ຄ່າຊັບພະຍາກອນທຳມະຊາດ, ພາສີ, ອາກອນ, ຄ່າທຳນຽມ, ຄ່າບໍລິການ ແລະ ພັນທະຕ່າງໆຢ່າງຄົບຖ້ວນ ແລະ ທັນເວລາ ຕາມກົດໝາຍ;,

- **ຮູບພາບທີ 3 ເບື້ອງລຸ່ມ:** ສື່ເຖິງພັນທະຂອງຜູ້ລົງທຶນ ຕ້ອງໄດ້ທົດແທນຄ່າເສຍຫາຍໃຫ້ແກ່ຜູ້ໄດ້ຮັບຜົນກະທົບ ຈາກການດຳເນີນກິດຈະການຂອງຕົນ, ໂດຍຜ່ານໜ່ວຍງານຂອງລັດທີ່ກ່ຽວຂ້ອງ;

- **ຮູບພາບທີ 4 ເບື້ອງລຸ່ມ:** ສື່ເຖິງ ຄວາມຮັບຜິດຊອບຂອງຜູ້ລົງທຶນ ໃນການປະຕິບັດພັນທະດ້ານສິ່ງແວດລ້ອມ ຕາມກົດໝາຍ ແລະ ລະບຽບການ ຢ່າງເຄັ່ງຄັດ ໂດຍການປົກປັກຮັກສາຊັບພະຍາກອນທຳມະຊາດ, ສິ່ງແວດລ້ອມ, ບໍ່ສ້າງມົນລະພິດ ແລະ ຜົນກະທົບຕໍ່ສິ່ງແວດລ້ອມ, ຊຸມຊົນ ແລະ ສັງຄົມ, ເພື່ອຫຼຸດຜ່ອນບັນຫາທາງດ້ານສິ່ງແວດລ້ອມທີ່ຈະເກີດຂຶ້ນ.

## ວິທີການ

- ຄູຝຶກສະເໜີສະພາບລວມຂອງຫົວຂໍ້ ໂດຍເບິ່ງຄໍາອະທິບາຍລວມຂອງຮູບພາບປະກອບ.
- ສົນທະນາກັບຜູ້ເຂົ້າຮ່ວມກ່ຽວກັບຫົວຂໍ້ດັ່ງກ່າວໂດຍນໍາເອົາເນື້ອໃນຂອງນິຕິກໍາທີ່ກ່ຽວຂ້ອງ, ເຄື່ອງມືທີ່ນໍາໃຊ້ປະກອບເຂົ້າໃນການຝຶກອົບຮົມເຊັ່ນ: ວີດີໂອ, ໂປສເຕີ ແລະ ອື່ນໆ ນໍາມາແລກປ່ຽນ ແລະ ຊອກໃຫ້ເຫັນເຖິງສ່ວນສໍາຄັນທີ່ມັນຈະເປັນປະໂຫຍດໃຫ້ກັບກຸ່ມເປົ້າໝາຍວ່ານິຕິກໍາທີ່ເຮົາຄັດເລືອກມາມີຄວາມສໍາຄັນແນວໃດ? ແລະ ຜູ້ທີ່ເປັນນັກວິຊາການຄວນເນັ້ນໜັກ ແລະ ເອົາໃຈໃສ່ໃນການອະທິບາຍ ພ້ອມທັງຊອກຮູ້ການເຂົ້າເຖິງແຫຼ່ງຂໍ້ມູນ ແລະ ໜ່ວຍງານທີ່ມີບົດບາດໃຫ້ການຊ່ວຍເຫຼືອໃນກໍລະນີທີ່ມີບັນຫາເກີດຂຶ້ນຈາກການດໍາເນີນໂຄງການ ອາດຈະສະແດງອອກເຊັ່ນ: ການຕັ້ງຄໍາຖາມ, ການປະກອບຄໍາຄິດເຫັນ, ການເຈລະຈາຕໍ່ລອງ, ການເຂົ້າເຖິງຂໍ້ມູນ ແລະ ການຕັດສິນໃຈ.
- ພາຍຫຼັງສົນທະນາ ແລ້ວແມ່ນໃຫ້ຂຶ້ນນໍາສະເໜີ.
- ຫຼັງຈາກນັ້ນໃຫ້ຜູ້ເຂົ້າຮ່ວມເຮັດກິດຈະກໍາ: ເຈລະຈາຕໍ່ລອງໃນການສະໜອງຂໍ້ມູນຂອງໂຄງການພັດທະນາ ເຊິ່ງແບ່ງອອກເປັນ 3 ກຸ່ມ: ຊຸມຊົນ, ນັກລົງທຶນ ແລະ ຜູ້ສັງເກດການ.
- ຄູຝຶກສະຫຼຸບກິດຈະກໍາດັ່ງກ່າວ ແລ້ວເຊື່ອມໂຍງເຂົ້າກັບມາດຕາກົດໝາຍທີ່ກ່ຽວຂ້ອງ

## ຄໍາແນະນໍາສໍາລັບຄູຝຶກ

- ນໍາໃຊ້ວີດີໂອ 'ການເຈລະຈາຕໍ່ລອງ ພາຍໃຕ້ຄວາມຍຸຕິທໍາ - FPIC' : https://bit.ly/2Z5wOjO
- ຫຼັງຈາກເບິ່ງວິດີໂອແລ້ວ ແມ່ນໃຫ້ເນັ້ນໜັກ ແລະ ເອົາໃຈໃສ່ໃນການອະທິບາຍ ພ້ອມທັງຊອກຮູ້ການເຂົ້າເຖິງແຫຼ່ງຂໍ້ມູນ ແລະ ໜ່ວຍງານທີ່ມີບົດບາດໃຫ້ການຊ່ວຍເຫຼືອໃນກໍລະນີທີ່ມີບັນຫາເກີດຂຶ້ນຈາກການດໍາເນີນໂຄງການ ອາດຈະສະແດງອອກເຊັ່ນ: ການຕັ້ງຄໍາຖາມ, ການປະກອບຄໍາຄິດເຫັນ, ການເຈລະຈາຕໍ່ລອງ, ການເຂົ້າເຖິງຂໍ້ມູນ ແລະ ການຕັດສິນໃຈການສົນທະນາກ່ຽວກັບການພັດທະນາ ແລະ ຊຸມຊົນມີສ່ວນຮ່ວມ.
- ນໍາໃຊ້ໂປສເຕີ ການມີສ່ວນຮ່ວມຂອງປະຊາຊົນໃນການພັດທະນາບ້ານ ເປັນເຄື່ອງມືອະທິບາຍເພີ່ມເຕີມ

## ເນື້ອໃນເອກະສານອ້າງອີງ

**ຄໍາແນະນໍາກ່ຽວກັບການພິຈາລະນາອະນຸມັດການລົງທຶນ ແລະ ກົນໄກການຄຸ້ມຄອງທີ່ດິນໃຫ້ເຊົ່າ ຫຼື ສໍາປະທານ ສໍາລັບການປູກພືດກະສິກໍາ ສະບັບເລກທີ 0457/ກຜທ, ລົງວັນທີ 27 ກຸມພາ 2019**

**ຂໍ້ 4. ການມີສ່ວນຮ່ວມຂອງປະຊາຊົນ**

- ສາມາດເຂົ້າຮ່ວມ ຫຼື ມີຄໍາເຫັນ ໃນຂະບວນການສຶກສາຄວາມເປັນໄປໄດ້ຂອງໂຄງການ ກັບຜູ້ລົງທຶນ ແລະ ອໍານາດການປົກຄອງທ້ອງຖິ່ນ;
- ອາດໄດ້ຮັບຂໍ້ມູນເປັນສໍາເນົາເອກະສານ ທີ່ກ່ຽວຂ້ອງກັບດິນ ຈາກເຈົ້າຂອງໂຄງການ ໃນການດໍາເນີນງານຂອງບໍລິສັດລົງທຶນ ລວມທັງຜົນໄດ້ ແລະ ຜົນເສຍ ຢ່າງຄົບຖ້ວນ;

- ສິນທະນາພາຍໃນຊຸມຊົນ ລວມທັງປຶດບາດຍິງ-ຊາຍ ໂດຍມີ ຂໍ້ມູນ, ແຜນທີ່, ແຜ່ນພັບ, ໂປສເຕີຫຼື ວິດີໂອ ເພື່ອໃຫ້ເຂົ້າໃຈ ເຖິງຄວາມເປັນໄປໄດ້ ແລະ ຜົນກະທົບ;
- ເຈລະຈາກັບຜູ້ລົງທຶນ ເພື່ອຮັບປະກັນຜົນປະໂຫຍດຂອງຊຸມຊົນ ບົນພື້ນຖານຄວາມສະໝັກໃຈ;
- ຊອກຫາຄຳແນະນຳຈາກພາຍນອກ ກ່ຽວກັບດ້ານກົດໝາຍ ແລະ ດ້ານວິຊາການ ເພື່ອຊ່ວຍໃນການຕັດສິນໃຈ ແລະ ການຕໍ່ລອງຕ່າງໆ;
- ມີການຕັດສິນໃຈ ແລະ ມີຄວາມເອກະພາບຂອງຊຸມຊົນທັງໝົດ ໂດຍອີງໃສ່ສຽງສ່ວນຫຼາຍ ແລະ ບັນທຶກເປັນລາຍລັກອັກສອນ ແລະ ຖືກຕ້ອງທາງດ້ານກົດໝາຍ;
- ສື່ສານ ກັບຜູ້ລົງທຶນຢ່າງຕໍ່ເນື່ອງ ໃນແຕ່ລະໄລຍະຂອງໂຄງການ, ຕິດຕາມ ແລະ ລາຍງານສະພາບການດຳເນີນທຸລະກິດໃຫ້ອຳນາດການປົກຄອງຂອງຕົນຊາບ.

**ກົດໝາຍວ່າດ້ວຍທີ່ດິນ (ສະບັບປັບປຸງ) ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019**

**ມາດຕາ 122 (ປັບປຸງ) ພັນທະຂອງຜູ້ເຊົ່າ ຫຼື ຜູ້ສຳປະທານ**

ຜູ້ເຊົ່າ ຫຼື ຜູ້ສຳປະທານ ມີພັນທະ ດັ່ງນີ້:

1. ນຳໃຊ້ທີ່ດິນໃຫ້ຖືກຕ້ອງຕາມເປົ້າໝາຍ;
2. ເສຍຄ່າເຊົ່າ ຫຼື ຄ່າສຳປະທານທີ່ດິນ, ຄ່າຊັບພະຍາກອນທຳມະຊາດ, ພາສີ, ອາກອນ, ຄ່າທຳນຽມ, ຄ່າບໍລິການ ແລະ ພັນທະຕ່າງໆຢ່າງຄົບຖ້ວນ ແລະ ທັນເວລາ ຕາມກົດໝາຍ;
3. ທົດແທນຄ່າເສຍຫາຍໃຫ້ແກ່ຜູ້ໄດ້ຮັບຜົນກະທົບ ຈາການດຳເນີນກິດຈະການຂອງຕົນ;
4. ປະຕິບັດພັນທະດ້ານສິ່ງແວດລ້ອມ ຕາມກົດໝາຍ ແລະ ລະບຽບການ ຢ່າງເຄັ່ງຄັດ;
5. ບໍ່ລະເມີດສິດ ແລະ ຜົນປະໂຫຍດຂອງຜູ້ອື່ນ;
6. ປະຕິບັດທາດສະພາບຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;
7. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ເງື່ອນໄຂຂອງສັນຍາ.

## 3.5 ໜ້າທີ 5: ຜົນກະທົບຂອງການປ່ຽນແປງດິນຟ້າອາກາດ ແລະ ການຫຼຸດຜ່ອນຄວາມສ່ຽງ




**ອະທິບາຍຮູບພາບ**

ຮູບນີ້ຈະສະແດງໃຫ້ເຫັນເຖິງຜົນກະທົບຂອງການປ່ຽນແປງດິນຟ້າອາກາດ, ລວມເຖິງການຫຼຸດຜ່ອນຄວາມສ່ຽງທີ່ອາດຈະເກີດຂຶ້ນ, ໂດຍຮູບຈະແບ່ງເປັນ 3 ຮູບໂດຍມີລາຍລະອຽດດັ່ງນີ້:

**ຮູບທີ 1** ສື່ໃຫ້ເຫັນເຖິງ ຜົນກະທົບຂອງການປ່ຽນແປງດິນຟ້າອາກາດໃນຫລາຍຮູບແບບ ບໍ່ວ່າຈະເປັນໄພນ້ຳຖ້ວມ, ໄພແຫ້ງແລ້ງ, ໄຟໄໝ້ລາມປ່າ, ເກີດລົມພາຍຸທີ່ຮຸນແຮງ, ຝົນຕົກບໍ່ຖືກຕາມລະດູການ ແລະ ຮູບແບບອື່ນໆ ໂດຍມີສາເຫດມາຈາກການທຳລາຍສິ່ງແວດລ້ອມ ເປັນຕົ້ນແມ່ນ ການທຳລາຍປ່າໄມ້, ການຖິ້ມຂີ້ເຫຍື້ອຊະຊາຍ, ການປ່ອຍອາຍພິດອອກສູ່ຊັ້ນບັນຍາກາດເຊັ່ນ: ອາຍເສຍຈາກໂຮງງານ, ການຈູດປ່າ...

**ຮູບທີ 2** ສື່ໃຫ້ເຫັນເຖິງ ວິທີຫຼຸດຜ່ອນຄວາມສ່ຽງຈາກຜົນກະທົບຂອງການປ່ຽນແປງດິນຟ້າອາກາດ ໂດຍການເພີ່ມແຫ່ງຊຶມຊັບທາດອາຍກາກບອນດ້ວຍການເພີ່ມພື້ນທີ່ສີຂຽວ, ການຟື້ນຟູປ່າໄມ້, ການຈັດສັນການນຳໃຊ້ທີ່ດິນ, ການບໍລິຫານຈັດການຂີ້ເຫຍື້ອ, ການຮັກສາຊັບພະຍາກອນນ້ຳ...

**ຮູບທີ 3** ເປັນສັນຍາລັກ 3 ອາເອັສ (3Rs): ແມ່ນສັນຍາລັກຂອງແນວທາງສຳຄັນທີ່ເຮັດໃຫ້ຂີ້ເຫຍື້ອຫຼຸດຜ່ອນລົງ, ເປັນວິທີການກຳຈັດຂີ້ເຫຍື້ອທີ່ມີປະສິດທິຜົນຫລາຍທີ່ສຸດ, ໂດຍມີວິທີຈັດຕັ້ງປະຕິບັດດັ່ງນີ້:

- ການຫຼຸດຜ່ອນການນຳໃຊ້ (Reduce)
- ການນຳກັບມາໃຊ້ຊ້ຳ (Reuse), ການນຳໄປແປຮູບໃໝ່ (Recycle)

## ວິທີການ

- ແບ່ງ 3 ກຸ່ມ ສົນທະນາກ່ຽວກັບ:
    1. ປະສົບການຜ່ານມາໃນການຮັບມືການປ່ຽນແປງດິນຟ້າອາກາດຂອງເຂົາເຈົ້າ;
    2. ສົນທະນາ: ສິດ ແລະ ໜ້າທີ່ຂອງພາກສ່ວນລັດຕໍ່ກັບວຽກງານດັ່ງກ່າວມີຄືແນວໃດ? ແລະ ສາມາດໃຫ້ການຊ່ວຍເຫຼືອປະຊາຊົນໄດ້ແນວໃດແດ່?
    3. ໃຫ້ຜູ້ເຂົ້າຮ່ວມຂຽນໃສ່ເຈ້ຍໃນເຈ້ຍ A0 ຫຼັງຈາກນັ້ນນໍາສະເໜີ.
- ຈາກນັ້ນ, ນໍາໃຊ້ກຸ່ມເກົ່າໃນການວິເຄາະຜົນກະທົບທີ່ຈະເກີດຂຶ້ນໃນໄລຍະສັ້ນ, ໄລຍະກາງ, ໄລຍະຍາວ ຂອງການປ່ຽນແປງດິນຟ້າອາກາດ.

| ໄລຍະສັ້ນ | ໄລຍະກາງ | ໄລຍະຍາວ |
|---|---|---|
| - ລະດູການມີການປ່ຽນແປງ<br><br>- ສູນເສຍພື້ນທີ່ການຜະລິດຕາມທີ່ຕ້ອງການ<br>- ສູນເສຍເວລາ ງົບປະມານ ແລະ ບຸກຄະລາກອນ | - ສະພາບອາກາດ ແລະ ລະບົບນິເວດ ມີການປ່ຽນແປງ<br>- ຂາດແຄນອາຫານ ແລະ ແຫຼ່ງນໍ້າ<br><br>- ຄວາມບໍ່ໝັ້ນຄົງທາງດ້ານເສດຖະກິດ, ການເງິນ, ຂາດແຄນບຸກຄະລາກອນ. | - ຄວາມສ່ຽງທີ່ຈະເກີດມີໄພພິບັດທໍາມະຊາດ<br>- ໄພຄຸກຄາມດ້ານສະບຽງອາຫານ<br>- ກະທົບເສດຖະກິດມະຫາພາກ, ຍຸດທະສາດການພັດທະນາ. |

- ສະຫຼຸບບ່ອນອ້າງອີງທາງດ້ານກົດໝາຍ ປິດທ້າຍດ້ວຍການເປີດວີດີໂອ ປ່ຽນແປງດິນຟ້າອາກາດ

## ຄໍາແນະນໍາສໍາລັບຄູຝຶກ

ຜູ້ອໍານວຍຄວາມສະດວກຫຼື ຄູຝຶກຕັ້ງຄໍາຖາມສົນທະນາໃນຮູບແບບຂອງການເລົ່າເລື່ອງ ຫຼື ແບ່ງປັນປະສົບການໂດຍວິທີການດັ່ງນີ້:

- ການທໍາມາຫາກິນ, ການປູກຝັງ, ກະສິກໍາຕ່າງໆ ພາຍໃນບ້ານ ສະດວກສະບາຍຢູ່ບໍ?
- ເລົ່າໃຫ້ທີມງານເຮົາຟັງແດ່ກ່ຽວກັບການທໍາມາຫາກິນ ແລະ ການດໍາລົງຊີວິດ ລະຫວ່າງ 5 ປີຜ່ານມາ ແລະ 10 ປີ ຄືນຫຼັງແຕກຕ່າງກັນຄືແນວໃດ? ອັນໃດສະດວກສະບາຍດີກ່ວາ?
- ເວົ້າສູ່ຟັງວ່າມີຫຍັງແດ່ທີ່ປ່ຽນແປງເຊັ່ນ: ປ່າໄມ້, ແຫຼ່ງນໍ້າ ແລະ ທີ່ດິນ ຍັງອຸດົມສົມບູນຄືເກົ່າບໍ່ ຖ້າບໍ່ແມ່ນຍ້ອນຫຍັງ?
- ໃນເມື່ອມີການປ່ຽນແປງແບບນີ້ຊາວບ້ານພວກເຮົາໄດ້ຮັບມື ຫຼື ປັບໂຕແນວໃດ?
- ແນວຄວາມຄິດຂອງຊາວບ້ານແມ່ນຫຍັງທີ່ເຮັດໃຫ້ເກີດມີການປ່ຽນແປງແບບນີ້? ແລະ ຖ້າຊາວບ້ານສາມາດມີສ່ວນຮ່ວມເຮັດໃຫ້ສະຖານະການມັນດີຂຶ້ນພວກທ່ານຢາກເຮັດຫຍັງ?
- ນໍາໃຊ້ໂປສເຕີ ຫຼື ຮູບພາບໃນປະຕິທິນໃຫ້ເຂົາເຈົ້າເບິ່ງ ແລ້ວຖາມເຂົາເຈົ້າວ່າ ເຮົາເຫັນຫຍັງແດ່ໃນຮູບພາບດັ່ງກ່າວ, ສະພາບບ້ານຂອງທ່ານດຽວນີ້ຄືກັບຮູບພາບໃດໃນປະຕິທິນ?

- ຜູ້ທີ່ໄປເຜີຍແຜ່ສາມາດເອົາເນື້ອໃນທີ່ໄດ້ຈາກວິເຄາະຜົນກະທົບໃນແຕ່ລະໄລຍະໃຫ້ເຂົາເຈົ້າໄດ້ຮູ້ ແລະ ສະຫຼຸບບ່ອນອ້າງອີງທາງດ້ານກົດໝາຍ.
- ປິດທ້າຍດ້ວຍການເປີດວີດີໂອກ່ຽວກັບ ການປ່ຽນແປງດິນຟ້າອາກາດ

## ເນື້ອໃນເອກະສານອ້າງອີງ

**ດຳລັດວ່າດ້ວຍ ການປ່ຽນແປງດິນຟ້າອາກາດ, ສະບັບເລກທີ 321/ລບ, ລົງວັນທີ 18 ກັນຍາ 2019**

**ມາດຕາ 2 ການປ່ຽນແປງດິນຟ້າອາກາດ**

ການປ່ຽນແປງດິນຟ້າອາດ ແມ່ນສະພາວະການປ່ຽນແປງຂອງອຸນຫະພູມສະເລ່ຍເທິງພື້ນຜິວໂລກ ທີ່ເພີ່ມຂຶ້ນເກີນເກນປົກກະຕິ ໃນໄລຍະຍາວ ຊຶ່ງເກີດມາຈາກການກະທຳຂອງມະນຸດ ໂດຍກົງ ຫຼື ທາງອ້ອມ ຫຼື ເກີດຈາກທຳມະຊາດ ທີ່ເຮັດທີ່ໃຫ້ອົງປະກອບຂອງຊັ້ນບັນຍາກາດປ່ຽນແປງ.

**ມາດຕາ 13 ມາດຕະການຮັບມືການປ່ຽນແປງດິນຟ້າອາກາດ**

ຂະແໜງການທີ່ກ່ຽວຂ້ອງ ຕ້ອງກຳນົດມາດຕະການຮັບມືການປ່ຽນແປງດິນຟ້າອາກາດ ທີ່ພົວພັນກັບຂະແໜງການຂອງຕົນໃນແຕ່ລະໄລຍະ ເພື່ອສ້າງຄວາມທົນທານໃນຂົງເຂດວຽກງານທີ່ກ່ຽວຂ້ອງ, ຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ເປັນຕົ້ນ ການນຳໃຊ້ທີ່ດິນ, ປ່າໄມ້, ຊັບພະຍາກອນນ້ຳ, ກະສິກຳ, ສາທາລະນະສຸກ, ພະລັງງານ, ອຸດສາຫະກຳ, ການພັດທະນາຕົວເມືອງ, ການສ້າງຄວາມທົນທານຂອງໂຄງລ່າງພື້ນຖານ.

**ມາດຕາ 21 ການເພີ່ມແຫຼ່ງຊຶມຊັບທາດອາຍກາກບອນ**

ການເພີ່ມແຫຼ່ງຊຶມຊັບທາດອາຍກາກບອນ ແມ່ນ ການກຳນົດມາດຕະການ ຫຼື ທາງເລືອກທີ່ເໝາະສົມ ໃນການເພີ່ມ ຫຼື ຮັກສາແຫຼ່ງທີ່ຊຶມຊັບ ແລະ ເກັບກັກເອົາທາດອາຍກາກບອນຈາກຊັ້ນບັນຍາກາດ ໂດຍຜ່ານຂະບວນການສັງເຄາະແສງ ເປັນຕົ້ນ ປ່າໄມ້, ດິນ, ພືດ, ຊັບພະຍາກອນນ້ຳ.

**ມາດຕາ 44 ສິດ ແລະ ໜ້າທີ່ຂອງຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ**

ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ມີສິດ ແລະ ໜ້າທີ່ ໃນການປະສານສົມທົບ ແລະ ໃຫ້ການຮ່ວມມືກັບຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໃນການຄຸ້ມຄອງ, ຕິດຕາມ, ກວດກາ ແລະ ຈັດຕັ້ງປະຕິບັດວຽກງານການປ່ຽນແປງດິນຟ້າອາກາດ ເປັນຕົ້ນ ການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ, ການສ້າງໂຄງລ່າງພື້ນຖານ ໃຫ້ມີຄວາມທົນທານຕໍ່ການປ່ຽນແປງດິນຟ້າອາກາດ, ການຫຼຸດຜ່ອນທາດອາຍເຮືອນແກ້ວຕາມພາລະບົດບາດຂອງຕົນ ທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ຂໍ້ມູນເພີ່ມເຕີມ

- ສຳລັບຫົວຂໍ້ດັ່ງກ່າວ ເບິ່ງເພີ່ມເຕີມໄດ້ທີ່ ຄູ່ມືແນະນຳ ການຄຸ້ມຄອງ ແລະ ກຳຈັດຂີ້ເຫຍື້ອ http://monre.myqnapcloud.com:8080/share.cgi?ssid=0o9Yy4B
- ປະຕິທິນກົດໝາຍ ປີ 2020 ຫົວຂໍ້ ການຮັບມືກັບໄພພິບັດທຳມະຊາດ,
- ຄູ່ມືຝຶກອົບຮົມ ການເຜີຍແຜ່ຂໍ້ມູນກ່ຽວກັບການອະນຸລັກທີ່ດິນ ແລະ ຊັບພະຍາກອນທຳມະຊາດ (ໂຄງການໄລຟ໌)

## 3.6 ໜ້າທີ 6: ຄວາມສະເໝີພາບຍິງ-ຊາຍ ໃນວຽກງານກະສິກຳ, ການປົກປັກຮັກສາປ່າໄມ້ ແລະ ສິ່ງແວດລ້ອມ




### ອະທິບາຍຮູບພາບ

ຮູບຊ້າຍມືທາງເທິງ: ສື່ເຖິງຄວາມເທົ່າທຽມລະຫວ່າງຍິງ-ຊາຍໃນການປົກປັກຮັກສາປ່າໄມ້, ໃນຮູບສະແດງໃຫ້ເຫັນເຖິງການມີສ່ວນຮ່ວມຂອງຜູ້ຍິງ ໃນການເຂົ້າຮ່ວມການລາດຕະເວນປ່າສະຫງວນຂອງບ້ານ. ນອກຈາກນີ້ຍັງສາມາດນຳໃຊ້ຄວາມຮູ້ຄວາມສາມາດປະກອບສ່ວນໃນວຽກງານຕ່າງໆໄດ້ ໂດຍສະເພາະວຽກງານຄົ້ນ ຄວ້າດ້ານວິທະຍາສາດປ່າໄມ້, ແຫຼ່ງນ້ຳ, ເຄື່ອງປ່າຂອງດົງ, ລະບົບນິເວດວິທະຍາ, ຊີວະນາໆພັນ ແລະ ວຽກງານ ອື່ນໆອີກ;

ຮູບຊ້າຍມືທາງລຸ່ມ: ສື່ເຖິງຄວາມເທົ່າທຽມລະຫວ່າງຍິງ-ຊາຍໃນການປົກປັກຮັກສາສິ່ງແວດລ້ອມ, ໃນຮູບສະແດງໃຫ້ເຫັນພາບຂອງການປູກຝັງຈິດສຳນຶກໃຫ້ແກ່ເດັກນ້ອຍໃນການບໍລິຫານຈັດການຂີ້ເຫຍື້ອຢ່າງຖືກວິທີ ແລະ ການອະນາໄມທີ່ຢູ່ອາໄສ.

ຮູບຂວາມືທາງເທິງ ແລະ ລຸ່ມ: ສື່ເຖິງຄວາມເທົ່າທຽມລະຫວ່າງຍິງ-ຊາຍໃນວຽກງານການຜະລິດກະສິກຳ, ປູກຝັງ ແລະ ລ້ຽງສັດ;

### ວິທີການ

- ໃຫ້ຜູ້ເຂົ້າຮ່ວມສົນທະນາ:
  - ທ່ານເຫັນບັນຫາ ແລະ ຄວາມບໍ່ເທົ່າທຽມແບບໃດໃນພື້ນທີ່ເປົ້າໝາຍທີ່ທ່ານກຳລັງເຮັດວຽກຢູ່?
  - ອົງການຂອງທ່ານມີແຜນ ຫຼື ກິດຈະກຳອັນໃດ ທີ່ເຊື່ອມໂຍງກ່ຽວກັບກິດຈະກຳສົ່ງເສີມຄວາມສະເໝີພາບລະຫວ່າງຍິງ-ຊາຍ? ຖ້າບໍ່ມີທ່ານຄິດວ່າບັນຫານັ້ນຄວນຈະມີວິທີການແກ້ໄຂຄືແນວໃດ?

- ແລ້ວນຳສະເໜີໃຫ້ກຸ່ມໃຫ່ຍຟັງ
- ຫຼັງຈາກນັ້ນເປີດວີດີໂອ ດົນແດນແສນຮັກ
- ນຳພາຜູ້ເຂົ້າຮ່ວມເຮັດກິດຈະກຳ: ຊົ່ວໂມງການດຳລົງຊີວິດຂອງຍິງຊາຍ ເພື່ອນຳໃຊ້ກິດຈະກຳໃນເວລາລົງບ້ານ.

## ຄຳແນະນຳສຳລັບຄູຝຶກ

- ນຳພາຜູ້ເຂົ້າຮ່ວມປະຕິບັດກິດຈະກຳຊົ່ວໂມງການດຳລົງຊີວິດລະຫວ່າງຍິງ-ຊາຍ

- ໃນເວລາຫຼິ້ນກິດຈະກຳຢູ່ໃນຂັ້ນບ້ານ ຖ້າມີຜູ້ເຖົ້າ ຫຼື ແມ່ຍິງທີ່ມີລູກນ້ອຍມານຳ, ສະຖານທີ່ຄັບແຄບ ແມ່ນຂໍອາສາສະໝັກຈາກຜູ້ເຂົ້າຮ່ວມຂຶ້ນມາສະແດງທ່າທາງໃຫ້ເບິ່ງ ຫຼື ໃຫ້ທີມງານ ຈຳນວນ 4 ຄົນ ຍິງ 2 ຄົນເປັນຜູ້ໄປສະແດງໃຫ້ເບິ່ງ ຖ້າວ່າເຂົາເຈົ້າບໍ່ກ້າອອກມາ.

- ພາຍຫຼັງທີ່ສຳເລັດກິດຈະກຳແມ່ນຕັ້ງຄຳຖາມສົນທະນາ:
    - ເວລາຜູ້ຍິງ ແລະ ຜູ້ຊາຍສະແດງທ່າທາງ ເຫັນເຂົາເຈົ້າເຮັດຫຍັງແດ່?
    - ການສະແດງທ່າທາງຂອງຜູ້ຍິງ ແລະ ຜູ້ຊາຍມີຄວາມແຕກຕ່າງກັນແນວໃດ?
    - ການໄປຫາອາຫານແມ່ນໃຜໄປຊອກຫາອາຫານໃນປ່າ?
    - ເຮົາມີແຕ່ນຳໃຊ້ປ່າໄມ້ເພື່ອຊອກຫາອາຫານບໍ່ ແລ້ວເຮົາຈະຮັດແນວໃດເພື່ອໃຫ້ນຳໃຊ້ໄດ້ດົນ?
- ສາມາດນຳໃຊ້ວີດີໂອ ບົດບາດແມ່ຍິງໃນວຽກງານກະສິກຳ ເປັນອັນສະຫຼຸບຈົບ.
- ເພື່ອເຮັດໃຫ້ມີຫຼາຍຮູບແບບໃນການນຳສະເໜີ ຜູ້ອຳນວຍຄວາມສະດວກອາດຈະເອົາຮູບພາບຄວາມແຕກຕ່າງຂອງຜູ້ຍິງ ແລະ ຜູ້ຊາຍ ມາປຽບທຽບໃຫ້ເຂົາເຈົ້າເບິ່ງ.

## ເນື້ອໃນເອກະສານອ້າງອີງ

### ກົດໝາຍ ວ່າດ້ວຍຄວາມສະເໝີພາບຍິງ-ຊາຍ, ສະບັບເລກທີ 77/ສພຊ, ລົງວັນທີ 28 ພະຈິກ 2019

### ມາດຕາ 15 ຄວາມສະເໝີພາບທາງດ້ານວິທະຍາສາດ, ເຕັກໂນໂລຊີ, ຂໍ້ມູນ ຂ່າວສານ ແລະ ສິ່ງແວດລ້ອມ

ຍິງ ແລະ ຊາຍ ມີຄວາມສະເໝີພາບໃນການຄົ້ນຄວ້າ, ນຳໃຊ້ຄວາມກ້າວໜ້າທາງດ້ານວິທະຍາສາດ, ເຕັກໂນໂລຊີ ທີ່ທັນສະໄໝ ແລະ ເຂົ້າເຖິງຂໍ້ມູນ ຂ່າວສານ ທີ່ເປັນປະໂຫຍດ.

ຍິງ ແລະ ຊາຍ ມີຄວາມສະເໝີພາບໃນການສະເໜີຄຳເຫັນ, ການນຳໃຊ້ ສື່, ເຕັກໂນໂລຊີ, ການສື່ສານທຸກຮູບແບບ, ຄວາມຮູ້, ຄວາມສາມາດ, ກຳມະວິທີການຜະລິດ ແລະ ປະສົບການດ້ານວິທະຍາສາດ ໃນການຄົ້ນຄວ້າ, ປະດິດສ້າງ, ບໍລິການ, ພັດທະນາຜະລິດຕະພັນ ທີ່ມີຄຸນນະພາບສູງ ໃນຮູບແບບໃໝ່ອອກສູ່ສັງຄົມ.

ຍິງ ແລະ ຊາຍ ມີຄວາມສະເໝີພາບກັນ ໃນການເຂົ້າເຖິງ, ນຳໃຊ້, ຄຸ້ມຄອງ, ອະນຸລັກ ແລະ ປົກປັກຮັກສາສິ່ງແວດລ້ອມ.

### ມາດຕາ 23 ການສົ່ງເສີມຄວາມສະເໝີພາບຍິງ-ຊາຍ

ການສົ່ງເສີມຄວາມສະເໝີພາບຍິງ-ຊາຍ ແມ່ນ ການສ້າງຄວາມເຂັ້ມແຂງໃຫ້ແມ່ຍິງ ດ້ວຍການສ້າງໂອກາດໃຫ້ຍິງໄດ້ຮັບການສຶກສາ, ຝຶກອົບຮົມ, ພັດທະນາ ແລະ ເຂົ້າຮ່ວມການເຄື່ອນໄຫວໃນທຸກຂົງເຂດວຽກງານໃນສັງຄົມ ແລະ ຊີວິດຄອບຄົວ ໂດຍໄດ້ຮັບຜົນປະໂຫຍດທີ່ເທົ່າທຽມກັບເພດຊາຍໃນເງື່ອນໄຂດຽວກັນ.

**ກົດໝາຍວ່າດ້ວຍປ່າໄມ້ (ສະບັບປັບປຸງ), ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019**

**ມາດຕາ 7 (ວັກ 2) ພັນທະໃນການປົກປັກຮັກສາ ແລະ ພັດທະນາ ປ່າໄມ້ ແລະ ທີ່ດິນປ່າໄມ້**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພັນທະໃນການປົກປັກຮັກສາ ແລະ ພັດທະນາປ່າໄມ້, ຊັບພະຍາກອນປ່າໄມ້, ທີ່ດິນປ່າໄມ້, ແຫຼ່ງນໍ້າ, ຊີວະນາໆພັນ, ສິ່ງແວດລ້ອມ ໃຫ້ຖືກຕ້ອງຕາມກົດໝາຍ, ບໍ່ເຮັດໃຫ້ປ່າໄມ້ ແລະ ທີ່ດິນປ່າໄມ້ເຊື່ອມໂຊມ, ບົກແຫ້ງ, ເຊາະເຈື່ອນ, ປ້ອງກັນບໍ່ໃຫ້ໄຟໄໝ້ປ່າ, ສະກັດກັ້ນ ແລະ ຕ້ານການທຳລາຍປ່າໄມ້ ແລະ ທີ່ດິນປ່າໄມ້ ທຸກຮູບແບບ.

**ມາດຕາ 48 (ປັບປຸງ) (ວັກ 1) ການປົກປັກຮັກສາປ່າສະຫງວນ**

ການປົກປັກຮັກສາປ່າສະຫງວນ ແມ່ນ ການຮັກສາປ່າໄມ້ ໃຫ້ອຸດົມສົມບູນ ກໍຄືປົກປັກຮັກສາ ພັນພືດ, ພັນສັດ, ຊີວະນາໆພັນ, ລະບົບນິເວດທີ່ມີຄຸນຄ່າທາງດ້ານ ທຳມະຊາດ, ປະຫວັດສາດ, ວັດທະນະທຳ ໃຫ້ດຳລົງຄົງຕົວ ແລະ ຂະຫຍາຍຕົວ ພ້ອມກັນນັ້ນ ກໍໃຫ້ມີປ່າໄມ້, ທິວທັດທຳມະຊາດທີ່ສວຍສົດງົດງາມ ເພື່ອການພັດທະນາສວນອຸທິຍານແຫ່ງຊາດ ຊຶ່ງເໝາະສົມຕໍ່ການທ່ອງທ່ຽວ ແລະ ການຄົ້ນຄວ້າທົດລອງທາງດ້ານວິທະຍາສາດ.

**ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ (ສະບັບປັບປຸງ), ສະບັບເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012**

**ມາດຕາ 3 (ປັບປຸງ) ການປົກປັກຮັກສາສິ່ງແວດລ້ອມ**

ການປົກປັກຮັກສາສິ່ງແວດລ້ອມ ແມ່ນ ການນຳໃຊ້ວິທີການ ແລະ ມາດຕະການ ເພື່ອປ້ອງກັນ, ອະນຸລັກ ແລະ ບູລະນະ ຟື້ນຟູ ສິ່ງແວດລ້ອມ, ຄວບຄຸມມົນລະພິດ, ເຫດການສຸກເສີນທາງດ້ານສິ່ງແວດລ້ອມ ແລະ ໄພພິບັດທຳມະຊາດ ເຮັດໃຫ້ສິ່ງແວດລ້ອມ ຂຽວ ສະອາດ ງາມຕາ, ປາສະຈາກມົນລະພິດ, ບໍ່ສົ່ງຜົນສະທ້ອນອັນບໍ່ດີ ຕໍ່ຊີວິດ, ສຸຂະພາບຂອງຄົນ, ສັດ, ພືດ ແລະ ລະບົບນິເວດ.

**ມາດຕາ 7 (ປັບປຸງ) ພັນທະປົກປັກຮັກສາສິ່ງແວດລ້ອມ**

ບຸກຄົນ, ຄອບຄົວ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພັນທະປົກປັກຮັກສາສິ່ງແວດລ້ອມ ດ້ວຍການປ້ອງກັນ, ປັບປຸງ, ບູລະນະ ຟື້ນຟູ, ຄວບຄຸມ, ຕິດຕາມ ແລະ ກວດກາສິ່ງແວດລ້ອມ ຕາມລະບຽບກົດໝາຍ, ບໍ່ສ້າງຜົນກະທົບ, ບໍ່ເຮັດໃຫ້ສິ່ງແວດລ້ອມ ເສື່ອມໂຊມ, ບໍ່ສ້າງ ແລະ ປ່ອຍມົນລະພິດ ເກີນມາດຕະຖານຄວບຄຸມມົນລະພິດ ແລະ ມາດຕະຖານຄຸນນະພາບ ສິ່ງແວດລ້ອມແຫ່ງຊາດ ແນໃສ່ຮັບປະກັນໃຫ້ສິ່ງແວດລ້ອມ ມີຄຸນນະພາບດີ ແລະ ຮັບປະກັນ ການພັດທະນາແບບຍືນຍົງ.

## <u>ຂໍ້ມູນເພີ່ມເຕີມ</u>

- ສາມາດອ່ານ ປະຕິທິນກົດໝາຍ ປີ 2016 ຫົວຂໍ້ ບົດບາດຂອງແມ່ນຍິງໃນສັງຄົມປັດຈຸບັນ,
- ປະຕິທິນກົດໝາຍ ປີ 2021 ຫົວຂໍ້ ການປົກປັກຮັກສາປ່າສະຫງວນ ແລະ ການວາງແຜນຈັດສັນປ່າໄມ້ແບບມີສ່ວນຮ່ວມ,
- ປະຕິທິນກົດໝາຍ ປີ 2017 ການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແບບມີສ່ວນຮ່ວມ

## 3.7 ໜ້າທີ 7: ສັນຍາກະສິກຳ




### ອະທິບາຍຮູບພາບ

ພາບລວມແມ່ນສະແດງໃຫ້ເຫັນເຖິງການເຮັດສັນຍາກະສິກຳ ກ່ຽວກັບ ການປູກຝັງ, ລ້ຽງສັດ ແລະ ການປະມົງ ເຊິ່ງຕ້ອງປະຕິບັດ ສິດ ແລະ ພັນທະຕໍ່ກັນ ເພື່ອພາໃຫ້ເກີດການປ່ຽນແປງ ຫຼື ສິ້ນສຸດລົງ.

**ຮູບທີ 1**: ໝາຍເຖິງ ພໍ່ຄ້າ ມາຕິດຕໍ່ຊື້ຂາຍສິນຄ້ານຳຊາວບ້ານ ເປັນຈຳນວນຫຼາຍ ແລະ ຊາວບ້ານກໍມີຈຸດປະສົງຂາຍສິນຄ້າໃຫ້ແກ່ພໍ່ຄ້າ ແລ້ວຊາວບ້ານກໍສະເໜີໃຫ້ໄປເຮັດສັນຍາກັນ;

**ຮູບທີ 2**: ສື່ເຖິງ ທັງສອງຝ່າຍໄດ້ມີການຕົກລົງເຮັດສັນຍານຳກັນແລ້ວ ສະຖານທີ່ເຮັດສັນຍາແມ່ນຢູ່ຫ້ອງການບ້ານ ໂດຍມີອຳນາດການປົກຄອງບ້ານເປັນຜູ້ຢັ້ງຢືນໃຫ້ ໂດຍມີເນື້ອໃນເປັນເອກະພາບກັນທັງສອງຝ່າຍ;

**ຮູບທີ 3**: ທັງສອງຝ່າຍ ໄດ້ເຊັນສັນຍາກັນເປັນທີ່ຮຽບຮ້ອຍ ແລະ ເອົາສັນຍາ, ໃນຮູບກໍຈະເຫັນເຂົາເຈົ້າຖືໃບສັນຍາທີ່ເຊັນກັນເປັນລາຍລັກອັກສອນ;

**ຮູບທີ 4**: ໝາຍເຖິງ ພໍ່ຄ້າໄດ້ເກັບຊື້ສິນຄ້າ ຢູ່ສວນກ້ວຍ, ຟາມໝູ, ໜອງປາ ທັງຜູ້ຊື້ ແລະ ຜູ້ຂາຍ ຕ່າງກໍໄດ້ປະຕິບັດຕາມສັນຍາ, ຜູ້ຂາຍໄດ້ສະໜອງສິນຄ້າທີ່ມີຄຸນະພາບ ແລະ ຜູ້ຊື້ກໍມາການເກັບຊື້ຕາມຈຳນວນ, ສະຖານທີ່ ທີ່ຕົກລົງກັນ;

**ຮູບທີ 5**: ໝາຍເຖິງ ທັງສອງຝ່າຍໄດ້ປະຕິບັດຕາມສັນຍາ ໂດຍການເອົາສິນຄ້າໃຫ້ພໍ່ຄ້າ ຫຼັງຈາກນັ້ນ ພໍ່ຄ້າກໍມອບເງິນ (ຈ່າຍເງິນ) ໃຫ້ແກ່ຊາວບ້ານຕາມການຕົກລົງກັນ.

## ວິທີການ

1. ຈັດກິດຈະກຳແບ່ງເປັນ 2 ກຸ່ມ:
2. ສົນທະນາ:
- ສັນຍາແມ່ນຫຍັງ? ສັນຍາກະສິກຳແມ່ນຫຍັງ?
- ປະສົບການຜ່ານມາທີ່ທ່ານພົບພໍ້ກ່ຽວກັບບັນຫາທີ່ເກີດຂຶ້ນໃນການປະຕິບັດສັນຍາກະສິກຳເປັນແນວໃດ?
- ຍ້ອນສາເຫດໃດຈຶ່ງພາໃຫ້ເກີດມີບັນຫາ ແລະ ຜົນກະທົບຕໍ່ການບໍ່ຕິບັດສັນຍາມີຫຍັງແດ່?
- ແຕ່ລະກຸ່ມຂຶ້ນນຳສະເໜີຜົນການສົນທະນາກ່ຽວກັບສະພາບລວມ
- ຈາກນັ້ນ, ຄູຝຶກສັງລວມຄຳຄິດເຫັນຈາກເວທີສົນທະນາ



3. ເປີດວິດີໂອ ວີດີໂອລ້ຽງໝູແລ້ວເປັນໜີ້.
- ໃຫ້ເວລາຜູ້ເຂົ້າຮ່ວມໃນການສົນທະນາກ່ຽວກັບວິດີໂອດັ່ງກ່າວ
- ພາກສ່ວນໃດຄວນມີຄວາມຮັບຜິດຊອບໃນເລື່ອງນີ້? ແລະ ແຕ່ລະພາກສ່ວນຄວນປະຕິບັດໜ້າທີ່ຄືແນວໃດ?
- ຖ້າເຫດການຄືໃນວິດີໂອເກີດຂຶ້ນກັບທ່ານ, ຊາວກະສິກອນ ຫຼື ຊຸມຊົນຂອງທ່ານ ທ່ານຈະຮູ້ສຶກແນວໃດ? ແລະ ຈະຮັບມືຈັດການບັນຫາແນວໃດ?
- ວິດີໂອນີ້ ສື່ເຖິງການປະຕິບັດສັນຍາຄືແນວໃດ?

4. ຄູຝຶກສັງລວມບົດຮຽນ ຫຼັງຈາກນັ້ນໃຫ້ຜູ້ເຂົ້າຮ່ວມວິເຄາະດ້ານດີ ດ້ານອ່ອນ ແລະ ສິ່ງທີ່ໜ້າສົນໃຈຂອງສັນຍາ ແລ້ວສະຫຼຸບເຊື່ອມໂຍງໃສ່ມາດຕາກົດໝາຍຂອງການປະຕິບັດສັນຍາ ຕາມປະມວນກົດໝາຍແພ່ງ

| ດ້ານບວກ | ດ້ານລົບ | ສິ່ງທີ່ໜ້າສົນໃຈ |
|---|---|---|
| + ເປັນເອກະສານຫຼັກຖານ<br>+ ເປັນບ່ອນອີງໃນການແກ້ໄຂບັນຫາ<br>+ ເປັນຂໍ້ຜູກມັດຄູ່ສັນຍາ<br>+ ເພີ່ມຄວາມໝັ້ນໃຈຂອງຄູ່ສັນຍາ<br>+ ມີຜົນທາງດ້ານກົດໝາຍ | • ບໍ່ສາມາດຮັບປະກັນວ່າ ຈະບໍ່ມີການລະເມີດ;<br>• ສ້າງຄວາມກັງວົນໃນການເຮັດສັນຍາ;<br>• ອາດຈະປະຕິບັດບໍ່ໄດ້ຕາມສັນຍາ ຖ້າຫາກວ່າບໍ່ສາມາດຜະລິດໄດ້ຕາມຈຳນວນນາຍທຶນຕ້ອງການ.<br>• ເສຍໂອກາດ. | • ເປັນຄວາມຮັບຜິດຊອບຂອງໃຜ?<br>• ພາກສ່ວນໃດມີພາລະບົດບາດໃນການແກ້ໄຂຂໍ້ຂັດແຍ່ງ.<br>• ຊາວກະສິກອນສ່ວນຫຼາຍບໍ່ຢາກເຮັດສັນຍາ;<br>• ສາມາດລົບລ້າງກ່ອນກຳນົດສັນຍາໄດ້ບໍ່?<br>• ຕ້ອງເຊັນຜ່ານຫ້ອງການທະບຽນສານບໍ່?<br>• ຈຳເປັນຕ້ອງມີບຸກຄົນທີສາມເຂົ້າຮ່ວມເປັນພະຍານໃນການເຮັດສັນຍາບໍ່? |

## ຄໍາແນະນໍາສໍາລັບຄູຝຶກ

- ຄູຝຶກຕ້ອງໄດ້ກະກຽມບົດຮຽນມາດຕາກົດໝາຍ
- ກຽມໂພສເຕີກ່ຽວກັບສັນຍາກະສິກໍາ ຫຼື ໜ້າປະຕິທິນກົດໝາຍ
- ກະກຽມວິດີໂອລ້ຽງໝູແລ້ວເປັນໜີ້ ແລະ ໃນເວລາອະທິບາຍສາມາດນໍາເອົາເນື້ອໃນທີ່ໄດ້ຈາກການວິເຄາະດ້ານດີ ດ້ານອ່ອນ ແລະ ສິ່ງທີ່ໜ້າສົນໃຈຂອງສັນຍານໍາມາອະທິບາຍຕື່ມໄດ້.

## ເນື້ອໃນເອກະສານອ້າງອີງ

**ປະມວນກົດໝາຍແພ່ງ ສະບັບ ເລກທີ 55/ສພຊ, ລົງວັນທີ 6 ທັນວາ 2018, ມາດຕາ 364 ແລະ ກົດໝາຍວ່າດ້ວຍກະສິກໍາ ສະບັບເລກທີ 01/98 ສພຊ, ລົງວັນທີ 10 ຕຸລາ 1998**

ສັນຍາກະສິກໍາ ແມ່ນການຕົກລົງລະຫວ່າງຄູ່ສັນຍາ ກ່ຽວກັບການປູກຝັງ, ການລ້ຽງສັດ ແລະ ການປະມົງ ຊຶ່ງພາໃຫ້ສິດ ແລະ ພັນທະທາງແພ່ງເກີດຂຶ້ນ, ປ່ຽນແປງ ຫຼື ສິ້ນສຸດລົງ.

**ປະມວນກົດໝາຍແພ່ງ ສະບັບເລກທີ 55/ສພຊ, ລົງວັນທີ 6 ທັນວາ 2018**

**ມາດຕາ 378 ການປະຕິບັດສັນຍາ**

ຄູ່ສັນຍາ ຕ້ອງປະຕິບັດສັນຍາດ້ວຍຄວາມຈິງໃຈ, ຄົບຖ້ວນ, ຕາມກໍານົດເວລາ ແລະ ໃນສະຖານທີ່ຊຶ່ງໄດ້ກໍານົດໄວ້ໃນ ສັນຍາ ຫຼື ກົດໝາຍ.

ຄູ່ສັນຍາ ບໍ່ມີສິດປະຕິເສດການປະຕິບັດສັນຍາ ຫຼື ປ່ຽນແປງເງື່ອນໄຂຂອງສັນຍາແຕ່ຝ່າຍດຽວ, ເວັ້ນເສຍແຕ່ກໍລະນີທີ່ກົດໝາຍຫາກໄດ້ອະນຸຍາດໃຫ້.

ຄູ່ສັນຍາ ມີສິດບໍ່ຮັບເອົາການປະຕິບັດທີ່ບໍ່ຄົບຖ້ວນ, ບໍ່ຖືກຕ້ອງ ແລະ ສອດຄ່ອງກັບ ສັນຍາ ຫຼື ກົດໝາຍ, ເວັ້ນເສຍແຕ່ ສັນຍາ ຫຼື ກົດໝາຍ ຫາກໄດ້ກໍານົດໄວ້ເປັນຢ່າງອື່ນ.

**ມາດຕາ 388 (ວັກ 1) ມາດຕະການຮັບປະກັນການປະຕິບັດສັນຍາ**

ເພື່ອຮັບປະກັນການປະຕິບັດສັນຍາຢ່າງມີປະສິດທິຜົນ ກົດໝາຍໄດ້ອະນຸຍາດໃຫ້ນໍາໃຊ້ມາດຕະການຕ່າງໆ ເຊັ່ນ ການມັດຈໍາ, ການປັບໃໝ, ການຈໍານໍາ, ການຈໍານອງ, ການຄໍ້າປະກັນດ້ວຍບຸກຄົນ ຫຼື ນິຕິບຸກຄົນ.

**ມາດຕາ 392 ຜົນສະທ້ອນຂອງການບໍ່ປະຕິບັດສັນຍາ**

ຖ້າຄູ່ສັນຍາຝ່າຍໃດໜຶ່ງ ຫາກບໍ່ປະຕິບັດສັນຍາ ຝ່າຍທີ່ຖືກລະເມີດມີສິດທວງໃຫ້ປະຕິບັດສັນຍາ, ໃຊ້ແທນຄວາມເສຍຫາຍ ຫຼື ຍົກເລີກສັນຍາ.

## <u>ຂໍ້ມູນເພີ່ມເຕີມ</u>

- ປະຕິທິນກົດໝາຍ ປີ 2014 ຄວາມຮູ້ພື້ນຖານກ່ຽວກັບການເຮັດສັນຍາ,
- ປະຕິທິນກົດໝາຍ ປີ 2019 ຫົວຂໍ້ ການເຮັດສັນຍາທີ່ຖືກຕ້ອງຕາມກົດໝາຍ,
- ຄູ່ມືສັນຍາກະສິກໍາ (ໂຄງການໄລຟ໌).

## 3.8 ໜ້າທີ 8: ການສືບທອດມູນມໍຣະດົກກ່ຽວກັບທີ່ດິນ




## ອະທິບາຍຮູບພາບ

ການສືບທອດມູນມໍຣະດົກກ່ຽວກັບທີ່ດິນ ເປັນສິດທີ່ຖືກກຳນົດໄວ້ໃນກົດໝາຍ, ແຕ່ປະຊາຊົນສ່ວນຫຼາຍແມ່ນຍັງຂາດຄວາມເຂົ້າໃຈທີ່ຖືກຕ້ອງ ໂດຍສະເພາະການສືບທອດມູນມໍຣະດົກກ່ຽວກັບທີ່ດິນ. ສະນັ້ນ, ໃນຮູບພາບນີ້ແມ່ນສະແດງໃຫ້ເຫັນ ຊັບເດີມ ແລະ ສິນສົມສ້າງ ທີ່ເປັນເຮືອນ ແລະ ທີ່ດິນປຸກສ້າງ, ທີ່ດິນນາ ຫຼື ທີ່ດິນສວນ, ຜູ້ສືບທອດມູນມໍຣະດົກຕາມກົດໝາຍ ແລະ ການສືບທອດມູນມໍຣະດົກຕາມພິໄນກຳ ຊຶ່ງລວມມີ ຂັ້ນຕອນການເຮັດພິໄນກຳເປັນລາຍລັກອັກສອນ ແລະ ພິໄນກຳທາງປາກເປົ່າ. ທຸກຂັ້ນຕອນແມ່ນມີຄວາມສຳຄັນຕໍ່ກັບການສືບທອດມູນມໍຣະດົກກ່ຽວກັບທີ່ດິນ ຕາມທີ່ກຳນົດໄວ້ໃນກົດໝາຍ. ລາຍລະອຽດອີງປະກອບຂອງຮູບແມ່ນອະທິບາຍດັ່ງລຸ່ມນີ້:

**ຮູບເບື້ອງຊ້າຍທາງເທິງ:** ໃນຮູບເຮົາຈະເຫັນແມ່ຍິງໜຶ່ງຄົນຢືນຢູ່ ແລ້ວມືຊີ້ໃສ່ໃບຕາດິນ ເຮົາຢາກສະແດງໃຫ້ເຫັນວ່າໃນເວລາທີ່ຍັງໂສດ (ຍັງບໍ່ໄດ້ແຕ່ງດອງ) ຊັບສິ່ງຂອງທີ່ຫາມາໄດ້ ຫຼື ໄດ້ຈາກການສືບທອດມູນມໍຣະດົກກໍຕາມ ຈະເປັນຊັບເດີມຂອງລາວແຕ່ພຽງຜູ້ດຽວເຊັ່ນ: ເຮືອນ ແລະ ທີ່ດິນ, ທີ່ດິນນາ, ທີ່ດິນສວນ.

**ຮູບເບື້ອງຂວາທາງເທິງ:** ສະແດງໃຫ້ເຫັນຮູບພາບຄອບຄົວ ຮູບນີ້ສື່ເຖິງສິນສົມສ້າງທີ່ຜົວເມຍຫາມາໄດ້ພາຍຫຼັງແຕ່ງດອງ (ໃນເວລາທີ່ເປັນຜົວເມຍກັນ) ເຊັ່ນ: ທີ່ດິນ-ເຮືອນ, ທີ່ດິນນາ ຈະກາຍເປັນກຳມະສິດຂອງຜົວ ແລະ ເມຍ ກ່ອນຈະຕົກທອດເປັນຂອງຜູ້ສືບທອດອື່ນໃນກໍລະນີຜົວ ຫຼື ເມຍ ເສຍຊີວິດ;

**ຮູບສີ່ຫຼ່ຽມຈະຕຸລັດທາງກາງເບື້ອງລຸ່ມ:** ມີຫົວຂໍ້ຂຽນໃສ່ວ່າ ມູນມໍຣະດົກ ຕາມນິຍາມຂອງກົດໝາຍແມ່ນຊັບທີ່ເປັນກຳມະສິດຂອງຜູ້ເສຍຊີວິດ ຊັບ ມີຫຼາຍຢ່າງ ແຕ່ໃນຮູບພາບສ່ວນນີ້ສື່ໃຫ້ເຫັນສະເພາະ ມູນມໍຣະດົກກ່ຽວກັບທີ່ດິນ, ອີງປະກອບລວມເດັ່ນໆມີຮູບໃບຕາດິນຢາຍຢູ່ສາມຈຸດ ເປັນສັນຍາລັກສະແດງເຖິງ ໃບຕາດິນປຸກສ້າງ

(ທີ່ດິນເຮືອນ), ໃບຕາດິນນາ ແລະ ໃບຕາດິນສວນ (ທີ່ດິນກະສິກໍາ). ນອກນັ້ນ, ຈະເຫັນມີລູກສອນຊີ້ໃສ່ສອງຟາກ ທີ່ອະທິບາຍກ່ຽວກັບຜູ້ສືບທອດມູນມໍຣະດົກຕາມກົດໝາຍ ແລະ ການສືບທອດມູນມໍຣະດົກຕາມພິໄນກໍາ.

**ຮູບເບື້ອງຊ້າຍລຸ່ມ**: ມີຫົວຂໍ້ຂຽນວ່າ ຜູ້ສືບທອດມູນມໍຣະດົກຕາມກົດໝາຍ ລຽງລໍາດັບລົງມາເປັນຕາຕະລາງສະແດງໃຫ້ເຫັນລໍາດັບໃນການຮັບມູນມໍຣະດົກທີ່ກົດໝາຍກໍານົດໄວ້ກ່ຽວກັບຜູ້ສືບທອດມູນມໍຣະດົກຕາມກົດໝາຍ ຊຶ່ງມີລໍາດັບຢູ່ ຫ້າ ຂັ້ນ ຖ້າຜູ້ໃດຫາກເປັນຍາດຊັ້ນຈໍາກັບເຈົ້າມູນມໍຣະດົກ ກໍຈະແມ່ນຜູ້ນັ້ນເປັນຜູ້ມີໄດ້ຮັບກ່ອນ. ສ່ວນຜູ້ທີ່ຢູ່ລໍາດັບໃກ້ຊິດຖັດໄປນັ້ນຈະໄດ້ຮັບກໍຕໍ່ເມື່ອຫາກບໍ່ມີຍາດຊັ້ນຈໍາຂອງເຈົ້າມູນມໍຣະດົກເທົ່ານັ້ນ.

**ຮູບເບື້ອງຂວາລຸ່ມ:** ສະແດງເຖິງການສືບທອດມູນມໍຣະດົກຕາມພິໄນກໍາ ເຊິ່ງເປັນເລື່ອງໃໝ່ທີ່ຫຼາຍຄົນຍັງບໍ່ທັນເຂົ້າໃຈ ຫຼື ເຂົ້າໃຈໃນຫຼາຍແງ່ມຸມແຕກຕ່າງກັນ ແລະ ບໍ່ຄ່ອຍເອົາໃຈໃສ່. ໃນທາງກົດໝາຍ ພິໄນກໍາ ແມ່ນການສະແດງເຈດຈໍານົງຂອງເຈົ້າຊັບ ໃນການເອົາຊັບຂອງຕົນໃຫ້ ບຸກຄົນ ຫຼື ນິຕິບຸກຄົນ ຫຼື ການຈັດຕັ້ງ ດ້ວຍການເຮັດເປັນລາຍລັກອັນສອນ ຫຼື ທາງປາກເປົ່າ.

ພິໄນກໍາເປັນລາຍລັກອັກສອນ ຫຼື ພິໄນກໍາທາງປາກເປົ່າ ແມ່ນມີຄວາມສໍາຄັນຫຼາຍທີ່ຈະເຮັດໃຫ້ຄອບຄົວ ຫຼື ການຈັດຕັ້ງ ຈັດການແບ່ງປັນຊັບທີ່ເປັນກໍາມະສິດຂອງຜູ້ເສຍຊີວິດ ຕາມເຈດຈໍານົງຂອງເຈົ້າຊັບພຽງຜູ້ດຽວ.

**ການເຮັດພິໄນກໍາເປັນລາຍລັກອັກສອນ:** ໃນຮູບຈະເຫັນເປັນຂັ້ນຕອນແນະນໍາການເຮັດພິໄນກໍາເປັນລາຍລັກອັກສອນ, ເຊິ່ງເລີ່ມຈາກການໄປຊື້ແບບຟອມຮ່າງພິໄນກໍາ ຫຼື ການໄປຂໍຄໍາປຶກສາດ້ານກົດໝາຍຈາກພະນັກງານລັດ ຫຼື ທະນາຍຄວາມ ຫຼື ນາຍບ້ານ ເພື່ອຮູ້ຂັ້ນຕອນການເຮັດພິໄນກໍາ.

ການເຮັດພິໄນກໍາເປັນລາຍລັກອັກສອນ ອາດເຮັດດ້ວຍ ການຂຽນພິໄນກໍາໂດຍເຈົ້າມູນມໍຣະດົກເອງ ຫຼື ການຂຽນພິໄນກໍາໂດຍຜູ້ອື່ນຂຽນໃຫ້ ຕ້ອງມີພະຍານຢ່າງໜ້ອຍ ສາມ ຄົນເຂົ້າຮ່ວມນໍາ ແຕ່ຕ້ອງຮັກສາຄວາມລັບໄວ້ຈົນກວ່າຈະມີການເປີດພິໄນກໍາ ຫຼື ການເປີດການສືບທອດມູນມໍຣະດົກ.

ໃນພິໄນກໍານັ້ນ ຕ້ອງບອກສະຖານທີ່, ວັນ, ເດືອນ, ປີ ເຮັດພິໄນກໍາ, ປະເພດ ແລະ ຈໍານວນຊັບທີ່ຈະມອບ, ຊື່ ແລະ ນາມສະກຸນຂອງ ຜູ້ມອບ ແລະ ຜູ້ຮັບ, ຜູ້ຂຽນ ແລະ ຂອງພະຍານ.

ຜູ້ມອບ, ຜູ້ຂຽນ ແລະ ພະຍານ ຕ້ອງລົງລາຍເຊັນ ແລະ ແປະໂປ້ມືໃສ່ພິໄນກໍາ.

ພິໄນກໍານັ້ນ ຫຼັງຈາກເຮັດແລ້ວ ຕ້ອງໃສ່ຊອງຕິດໃຫ້ແໜ້ນ ຫຼື ຕິດດ້ວຍຄັ່ງ ແລ້ວໄປຂຶ້ນທະບຽນ ນໍານາຍທະບຽນສານ (ກົມທະບຽນສານ, ພະແນກຍຸຕິທໍາແຂວງ ຫຼື ຫ້ອງການຍຸຕິທໍາເມືອງ) ບ່ອນເຈົ້າມູນມໍຣະດົກຢູ່ ຫຼື ບ່ອນທີ່ໃກ້ຄຽງ ຫຼື ນໍາໄປໄວ້ຢູ່ອົງການປົກຄອງບ້ານ ສໍາລັບບ່ອນທີ່ບໍ່ມີຫ້ອງການທະບຽນສານ.

**ການເຮັດພິໄນກໍາທາງປາກເປົ່າ**: ເປັນພາບທີ່ສື່ໃຫ້ເຫັນກ່ຽວກັບ ເຈົ້າຂອງຊັບ ທີ່ບໍ່ສາມາດເຮັດພິໄນກໍາເປັນລາຍລັກອັກສອນໄດ້ ຍ້ອນຕົກຢູ່ໃນສະພາບອັນຕະລາຍທີ່ໃກ້ຈະເສຍຊີວິດ, ຍ້ອນສຸຂະພາບອ່ອນເພຍ (ເຈັບປ່ວຍ) ກໍລະນີນີ້ຈະເຮັດພິໄນກໍາທາງປາກເປົ່າກໍໄດ້ ໂດຍໃຫ້ມີພະຍານຮັບຮູ້ນໍາ (ພະຍານຢ່າງໜ້ອຍ ສາມຄົນ).

ພະຍານດັ່ງກ່າວ ຕ້ອງແຈ້ງຂໍ້ຄວາມທັງໝົດ ທີ່ເຈົ້າມູນມໍຣະດົກສັ່ງໄວ້ນັ້ນ ຕໍ່ຫ້ອງການທະບຽນສານ ຫຼື ອົງການປົກຄອງບ້ານໃນທັນທີ ແລະ ຊີ້ແຈງສາເຫດທີ່ພາໃຫ້ເຈົ້າຂອງຊັບນັ້ນ ບໍ່ສາມາດເຮັດພິໄນກໍາເປັນລາຍລັກອັກສອນໄດ້ ຊຶ່ງຫ້ອງການທະບຽນສານ ຫຼື ອົງການປົກຄອງບ້ານ ຕ້ອງເຮັດບົດບັນທຶກຂໍ້ຄວາມດັ່ງກ່າວໄວ້.

## ວິທີການ

- ສາຍວິດີໂອ ມໍລະດົກພໍ່ (ສາຍຮອດແຕ່ບ່ອນເຂົາເຈົ້າໄປປຶກສານໍາຂັ້ນບ້ານ) ຫຼັງຈາກນັ້ນຕັ້ງຄໍາຖາມສົນທະນາ:
    - ເຫັນຫຍັງແດ່ໃນວິດີໂອ?
    - ຍ້ອນສາເຫດອັນໃດຈຶ່ງເກີດມີບັນຫາທີ່ເກີດຂຶ້ນໃນວິດີໂອ?
    - ພວກທ່ານຄິດວ່າຜູ້ເປັນລູກບໍ່ມີສິດໄດ້ຮັບມູນບໍ່ ພາຍຫຼັງທີ່ພໍ່ຂຽນໃບມອບສິດໃຫ້ແຕ່ເມຍໃໝ່?
- ແບ່ງກຸ່ມຜູ້ເຂົ້າຮ່ວມອອກເປັນ 3 ກຸ່ມ ໂດຍຫ້າມບໍ່ໃຫ້ມີການນໍາໃຊ້ມືຖື, ຄອມພິວເຕີ ແລະ ປຶ້ມຕໍາລາ ໃຫ້ທາງ 3 ກຸ່ມຂຽນຜູ້ທີ່ມີສິດທີ່ຈະໄດ້ຮັບມູນອອກມາໃສ່ເຈ້ຍແຜ່ນໃຫຍ່ ແລ້ວໃຫ້ແຕ່ລະກຸ່ມຂຶ້ນນໍາສະເໜີ
- ຜູ້ອໍານວຍຄວາມສະດວກ ສາຍວິດີໂອຄືນໃຫ້ຄັ້ງໜຶ່ງແຕ່ຕົ້ນຈົນຈົບ ແລະ ເຊື່ອມໂຍງໃສ່ກັບມາດຕາກົດໝາຍພ້ອມທັງເນັ້ນໜັກໃຫ້ຜູ້ເຂົ້າຮ່ວມກ່ຽວກັບຈຸດທີ່ຄວນເອົາໃຈໃສ່ໂດຍອີງຕາມສະພາບໃນແຕ່ລະພື້ນທີ່.

## ຄໍາແນະນໍາສໍາລັບຄູຝຶກ

- ສາມາດນໍາໃຊ້ຄໍາຖາມວ່າ ການສືບທອດມູນມໍລະດົກ ມີຄວາມເຂົ້າໃຈແນວໃດ ແລະ ນໍາໃຊ້ວິດີໂອ
- ໃນເວລາເປີດວິດີໂອ ກໍສາມາດເປີດແລ້ວຢຸດເປັນຈັງຫວະ ແລະ ສາມາດສົນທະນານໍາຜູ້ເຂົ້າຮ່ວມໄດ້.

## ເນື້ອໃນເອກະສານອ້າງອີງ

**ກົດໝາຍວ່າດ້ວຍທີ່ດິນ (ສະບັບປັບປຸງ) ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019**

**ມາດຕາ 129 (ໃໝ່) ການສືບທອດມູນມໍຣະດົກ**

ການສືບທອດມູນມໍຣະດົກ ແມ່ນ ການຕົກທອດສິດນໍາໃຊ້ທີ່ດິນ ໃຫ້ຜູ້ທີ່ມີສິດສືບທອດຕາມກົດໝາຍ ແລະ ຕາມພິໄນກໍາ.

ຜູ້ມີສິດສືບທອດສິດນໍາໃຊ້ທີ່ດິນ ມີແຕ່ພົນລະເມືອງລາວ ທີ່ມີທີ່ຢູ່ຖາວອນໃນ ສປປ ລາວ ເທົ່ານັ້ນ.

ໃນກໍລະນີຜູ້ມີສິດສືບທອດສິດນໍາໃຊ້ທີ່ດິນ ຫາກອາຍຸບໍ່ທັນພົ້ນກະສຽນ ສິບແປດປີ ຫຼື ຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ ແມ່ນໃຫ້ໃສ່ຊື່ຜູ້ກ່ຽວໄວ້ໃນໃບຕາດິນ ແຕ່ຕ້ອງໄດ້ແຕ່ງຕັ້ງຜູ້ຄຸ້ມຄອງສິດນໍາໃຊ້ທີ່ດິນຕອນນັ້ນ ເພື່ອຮັບປະກັນຜົນປະໂຫຍດຂອງຜູ້ສືບທອດມູນມໍຣະດົກ ຕາມທີ່ໄດ້ກໍານົດໄວ້ໃນປະມວນກົດໝາຍແພ່ງ.

**ປະມວນກົດໝາຍແພ່ງ ສະບັບເລກທີ 55/ສພຊ, ລົງວັນທີ 6 ທັນວາ 2018**

**ມາດຕາ 565 ມູນມໍຣະດົກ**

ມູນມໍຣະດົກ ແມ່ນ ຊັບທີ່ເປັນກໍາມະສິດຂອງຜູ້ເສຍຊີວິດ ລວມທັງ ສິດ ແລະ ພັນທະຂອງຜູ້ກ່ຽວ, ເວັ້ນເສຍແຕ່ ສິດ ແລະ ພັນທະ ຊຶ່ງກົດໝາຍ ຫຼື ສັນຍາໄດ້ກໍານົດໄວ້ໃຫ້ຜູ້ເສຍຊີວິດ ຕ້ອງປະຕິບັດດ້ວຍຕົນເອງໃນເວລາທີ່ຜູ້ກ່ຽວມີຊີວິດຢູ່ນັ້ນ.

**ມາດຕາ 566 ການສືບທອດມູນມໍຣະດົກ**

ການສືບທອດມູນມໍຣະດົກ ແມ່ນ ການຕົກທອດມູນມໍຣະດົກຂອງຜູ້ເສຍຊີວິດ ໃຫ້ແກ່ຜູ້ສືບທອດມູນມໍຣະດົກ ຕາມກົດໝາຍ ຫຼື ຕາມພິໄນກໍາ.

**ມາດຕາ 574 ຜູ້ສືບທອດມູນມໍຣະດົກຕາມກົດໝາຍ**

ຜູ້ສືບທອດມູນມໍຣະດົກຕາມກົດໝາຍ ມີ ດັ່ງນີ້:

1. ລູກຄີງ, ລູກລ້ຽງ, ລູກນ້າ ຂອງເຈົ້າມູນມໍຣະດົກ ລວມທັງເດັກຢູ່ໃນທ້ອງຂອງຜູ້ເປັນແມ່ກໍມີສິດສືບທອດມູນມໍຣະດົກເຊັ່ນດຽວກັນ ແມ່ເປັນຜູ້ຄຸ້ມຄອງພູດຂອງຜູ້ກ່ຽວໄວ້;
2. ຜົວ ຫຼື ເມຍ ຂອງເຈົ້າມູນມໍຣະດົກທີ່ຍັງມີຊີວິດຢູ່;
3. ພໍ່, ແມ່, ປູ່, ຍ່າ, ພໍ່ເຖົ້າ, ແມ່ເຖົ້າ, ທວດ ຂອງເຈົ້າມູນມໍຣະດົກ;
4. ອ້າຍ, ເອື້ອຍ, ນ້ອງ, ລຸງ, ປ້າ, ອາວ, ອາ, ນ້າບ່າວ, ນ້າສາວ, ຫຼານ, ເຫຼນ ຂອງເຈົ້າມູນມໍຣະດົກ;
5. ລັດ ຫຼື ນິຕິບຸກຄົນ ຫຼື ບຸກຄົນອື່ນ ທີ່ໄດ້ກຳນົດໄວ້ໃນປະມວນກົດໝາຍສະບັບນີ້.

**ມາດຕາ 590 ພິໄນກຳ**

ພິໄນກຳ ແມ່ນ ການສະແດງເຈດຈຳນົງຂອງເຈົ້າຂອງຊັບ ໃນການເອົາຊັບຂອງຕົນໃຫ້ ບຸກຄົນ ຫຼື ນິຕິບຸກຄົນ ຫຼື ການຈັດຕັ້ງ ດ້ວຍການເຮັດເປັນລາຍລັກອັກສອນ ຫຼື ທາງປາກເປົ່າ.

ພິໄນກຳ ມີຜົນບັງຄັບທາງດ້ານກົດໝາຍ ນັບແຕ່ເຈົ້າຂອງຊັບ ເສຍຊີວິດເປັນຕົ້ນໄປ.

## ແບບຟອມຊ້ອນທ້າຍ

## ແບບຟອມເກັບກຳຂໍ້ມູນ ຜູ້ໄດ້ຮັບຜົນປະໂຫຍດຈາກການເຜີຍແຜ່ປະຕິທິນ

**(ຜ່ານກິດຈະກຳຕ່າງໆເຊັ່ນກອງປະຊຸມ, ຝຶກອົບຮົມ, ການເຜີຍແຜ່ ແລະ ການແຈກຢາຍ)**

| ລຳດັບ | ລາຍການ | ຈຳນວນ |
|---|---|---|
| 1 | ຊື່ອົງການຈັດຕັ້ງ: | |
| 2 | ຊື່ຂອງກິດຈະກຳ: | |
| 3 | ສະຖານທີ່ເຮັດກິດຈະກຳ: | |
| 3.1 | ແຂວງ: | |
| 3.2 | ເມືອງ: | |
| 3.3 | ບ້ານ: | |
| 4 | ຈຳນວນຜູ້ເຂົ້າຮ່ວມທັງໝົດ: | |
| 4.1 | ທີ່ເປັນຊາວບ້ານທົ່ວໄປ: | |
| 4.2 | ທີ່ມາຈາກພາກລັດ: | |
| 4.3 | ຈາກອົງການຈັດຕັ້ງທາງສັງຄົມ: | |
| 4.4 | ຈຳນວນຜູ້ຍິງ: | |
| 5 | ຈຳນວນຜູ້ທີ່ໄດ້ຮັບຜົນປະໂຫຍດທັງໝົດ (ລວມຈາກທັງທາງກົງ ແລະ ທາງອ້ອມ): | |
| 6 | ຈຳນວນຜູ້ເຂົ້າຮ່ວມທີ່ເປັນຊົນເຜົ່າ, ຄົນພິການ, ຄົນດ້ອຍໂອກາດ: | |
| 7 | ຂໍ້ແນະນຳທາງດ້ານກົດໝາຍກ່ຽວກັບປະເດັນຂອງສິດໃນການຄອບຄອງທີ່ດິນ: | |
| 7.1 | ຂໍ້ສະເໜີ/ຄຳຂໍຮ້ອງ: | |
| 7.2 | ວັນທີຂອງ ຂໍ້ສະເໜີ/ຄຳຂໍຮ້ອງ: | |
| 7.3 | ຄຳຕອບ/ຂໍ້ແນະນຳ: | |
| 7.4 | ວັນທີຂອງ ຄຳຕອບ/ຂໍ້ແນະນຳ: | |
| 7.5 | ລະດັບຄວາມພໍໃຈຈາກຜູ້ໄດ້ຮັບຜົນປະໂຫຍດ: | |
| 8 | ຊື່ຂອງຜູ້ສັງລວມຂໍ້ມູນນີ້: | |
| 9 | **ໝາຍເຫດ:** | |

# ແບບຟອມບັນທຶກຄຳຮ້ອງຂໍຊ່ວຍເຫຼືອທາງດ້ານກົດໝາຍ ຈາກຜູ້ໄດ້ຮັບຜົນປະໂຫຍດ ຈາກການນຳໃຊ້ປະຕິທິນ

| ຄຳຮ້ອງຂໍຊ່ວຍເຫຼືອທາງດ້ານກົດໝາຍ | | | | |
|---|---|---|---|---|
| ລຳດັບ | ວັນທີ | ຄຳຮ້ອງຂໍທາງດ້ານກົດໝາຍ | ຊື່ບ້ານ/ເມືອງ/ແຂວງ | ຍິງ/ຊາຍ |
| 1 | | | | |
| 2 | | | | |
| 3 | | | | |
| 4 | | | | |
| 5 | | | | |
| 6 | | | | |
| 7 | | | | |
| 8 | | | | |
| 9 | | | | |
| 10 | | | | |
| 11 | | | | |
| 12 | | | | |
| 13 | | | | |
| 14 | | | | |
| 15 | | | | |

## ແບບຟອມບັນທຶກຄຳຮ້ອງຂໍຊ່ວຍເຫຼືອທາງດ້ານກົດໝາຍ ຈາກຜູ້ໄດ້ຮັບຜົນປະໂຫຍດ ຈາກການນຳໃຊ້ປະຕິທິນ

| ໃຫ້ຄຳແນະນຳດ້ານກົດໝາຍ | | |
|---|---|---|
| ວັນທີ | ຄຳຕອບ | ລະດັບຄວາມພໍໃຈຈາກຜູ້ໄດ້ຮັບຜົນປະໂຫຍດ |
| | | |
| | | |
| | | |
| | | |
| | | |
| | | |
| | | |
| | | |
| | | |
| | | |
| | | |
| | | |
| | | |
| | | |
| | | |

**ແນະນຳຂໍ້ມູນເພີ່ມເຕີມ:**

- ດາວໂຫຼດປະຕິທິນກົດໝາຍ ໃນຮູບແບບເອເລັກໂຕຣນິກ ໄດ້ທີ່: http://bit.ly/2lFcK3u
- ໝາຍເຫດທາງລັດຖະການ ຂອງ ສປປ ລາວ ແມ່ນເອກະສານທາງການຂອງລັດ ທີ່ເປັນຮູບແບບເອເລັກໂຕຣນິກ ຊຶ່ງເປັນບ່ອນລົງບັນດານິຕິກຳ ທີ່ໄດ້ປະກາດໃຊ້ແລ້ວ ເຊິ່ງສາມາດເຂົ້າດາວໂຫຼດບັນດາເອກະສານນິຕິກຳ ໄດ້ທີ່: http://laoofficialgazette.gov.la/
- ຮູບເງົາເລື່ອງສັ້ນ ທີ່ມີເນື້ອໃນກ່ຽວກັບການແກ້ໄຂບັນຫາທາງດ້ານທີ່ດິນ, ການມີສ່ວນຮ່ວມຂອງປະ ຊາຊົນໃນຂະບວນການພັດທະນາຂັ້ນບ້ານ ແລະ ການປົກປັກຮັກສາ-ຄຸ້ມຄອງການນຳໃຊ້ທີ່ດິນກະສິກຳຂອງປະຊາຊົນບັນດາເຜົ່າໃນເຂດຊົນນະບົດ ເຊິ່ງຈັດທຳຂື້ນໂດຍ ໂຄງການ ເຄືອຂ່າຍຂໍ້ມູນທີ່ດິນ (Right-LINK), ອົງການບ້ານຈຸດສຸມສາກົນ (VFI) ເຊິ່ງສາມາດເຂົ້າເບິ່ງ ຫຼື ນຳໃຊ້ປະກອບການຝຶກອົບຮົມໄດ້ທີ່: https://www.youtube.com/user/rightslink/videos

**ໝາຍເຫດ:** ຖ້າອົງການໃດ ຫລື ພາກສ່ວນໃດຕ້ອງການຢາກຈັດພິມປື້ມຄູ່ມືສະບັບນີ້ ແມ່ນໃຫ້ຂໍອະນຸຍາດນຳໂຄງການໄລຟ໌ (LIFE) ແລະ ກອງເຂລາ ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ (LIWG)

**ຂໍ້ມູນຕິດຕໍ່ໂຄງການໄລຟ໌ (LIFE):**

ອີເມລຕິດຕໍ່ ຫົວຫນ້າບໍລິຫານໂຄງການ LIFE: lena.vilayphet@villagefocus.org

ອີເມລຕິດຕໍ່ ຫົວໜ້າທີມຄູຝຶກ LIFE: tingkoh@gmail.com

ໂທລະສັບ: 021 312 519

ເວັບໄຊ໌: https://laolandinfo.org/category/life/

**ຂໍ້ມູນຕິດຕໍ່ ກອງເລຂາ ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ (LIWG):**

ອີເມລ: info@laolandinfo.org

ໂທລະສັບ: +856 30 981 5657

ເວັບໄຊ໌: www.laolandinfo.org